# ປື້ມຄູ່ມື ຝຶກອົບຮົມຜູ້ນຳພາກິດຈະກຳເພື່ອນສອນເພື່ອນ
# ຊຸດກິດຈະກຳທັກສະຊີວິດຂັ້ນພື້ນຖານ

ວິທີການຈັດຕັ້ງປະຕິບັດວຽກງານໂພຊະນາການ
ຢູ່ໂຮງຮຽນມັດທະຍົມຕອນຕົ້ນແກ່ກຸ່ມໄວໜຸ່ມ

## ໂມດູນ 6: ສຸຂະພາບທາງເພດ
## ແລະ ສຸຂະພາບຈະເລີນພັນ(SRH)



**ໂຄງການຮ່ວມມືປັບປຸງດ້ານໂພຊະນາການ**

Save the Children
care
ສະຫະພາບ ເອີຣົບ
European Union
CCL
ChildFund Laos

## ພາກສະເໜີ

ໃນເບື້ອງຕົ້ນ ພວກເຮົາຕ້ອງການບັນທຶກຈິດຈໍາຄວາມກະຕັນຍູຮູ້ບຸນຄຸນຂອງພວກເຮົາມາຍັງເຈົ້າໜ້າທີ່ທາງການຂັ້ນແຂວງ ແລະ ຂັ້ນເມືອງຂອງກະຊວງສາທາລະນະສຸກ **MOH** ແລະ ກະຊວງສຶກສາທິການ ແລະ ກິລາ **MOSE** ສໍາລັບການຊີ້ນໍາ ແລະ ຊຸກຍູ້ສົ່ງເສີມການກໍານົດປຶ້ມຄູ່ມືການຝຶກອົບຮົມການຈັດກິດຈະກໍາເພື່ອນສອນເພື່ອນເຫຼັ້ມນີ້ ແລະ ສະໜອງອຸປະກອນການຝຶກອົບຮົມສໍາລັບໂຮງຮຽນມັດທະຍົມຕອນຕົ້ນ **LSS**

ໃນເບື້ອງຕົ້ນຂອງການກໍານົດໂຄງການ, ຄູ່ຮ່ວມງານຂອງໂຄງການຮ່ວມມືປັບປຸງດ້ານໂພຊະນາການ ແລະ ຄູ່ຮ່ວມງານຂອງລັດຖະບານ, ບັນດາກຸ່ມຄູ່ຮ່ວມງານໄດ້ເຫັນດີເປັນເອກະພາບກັນວ່າ ພວກເຮົາຄົງຈະບໍ່ສາມາດອອກແບບລາຍການ ແລະ ອຸປະກອນໃໝ່ໄດ້ຢ່າງຄົບຖ້ວນ ແລະ ສົມບູນ ແຕ່ຈະໄດ້ກໍ່ສ້າງ ແລະ ປັບປຸງລາຍການຕ່າງໆທີ່ລັດຖະບານພ້ອມດ້ວຍຄູ່ຮ່ວມງານພັດທະນາວຽກງານດ້ານໂພຊະນາການທີ່ມີຢູ່ແລ້ວ. ການຄົ້ນຄວ້າຢ່າງກວ້າງຂວາງໄດ້ຈັດຕັ້ງຂຶ້ນເພື່ອສໍາຫຼວດ, ອອກແບບ ແລະ ທົບທວນບັນດາອຸປະກອນການຝຶກອົບຮົມທີ່ມີຢູ່ແລ້ວໃນໄລຍະຜ່ານມາທີ່ໄດ້ຮັບການພັດທະນາໂດຍລັດຖະບານ ແລະ ຄູ່ຮ່ວມງານອື່ນໆຂອງລັດຖະບານ ສ ປປ ລາວ ເພື່ອໃຫ້ທຽມທັນກັບບັດດາປະເທດເພື່ອນບ້ານ. ພວກເຮົາໄດ້ນໍາມາເຊິ່ງອຸປະກອນທີ່ດີເລີດສອງສາມລາຍການ ແລະ ພາຍຫຼັງທີ່ມີການທົບທວນໃນໄລຍະສໍາຄັນດັ່ງກ່າວຈຶ່ງໄດ້ຕັດສິນໃຈທັນມານໍາໃຊ້ອຸປະກອນທີ່ນໍາມາຈາກຫຼາຍແຫຼ່ງທີ່ແຕກຕ່າງກັນ.

1. ວົງມົນແຫ່ງມິດຕະພາບຈາກ ອົງການຊ່ວຍເຫຼືອເດັກສາກົນ ປະຈໍາ ສປປ ລາວ **SCI**
2. ບົດບາດ ຍິງ-ຊາຍ ຈາກ ອົງການຊ່ວຍເຫຼືອເດັກສາກົນ ປະຈໍາ ສປປ ລາວ **SCI** ແລະ ອົງການແຄຣ໌ ນານາຊາດ ປະຈໍາ ສປປ ລາວ **CARE**
3. ວີດີໂອກ່ຽວກັບວຽກງານດ້ານໂພຊະນາການຫຼັກເລື່ອງຈາກ ຊຸມຊົນຊື່ນໃຈ 'ຊຸດຄວາມສຸກຂອງຄອບຄົວ' ເປັນຄູ່ຮ່ວມງານກັບອົງການອາຫານໂລກ **WFP,** ອົງການ ອີຟັດ **IFAD** ແລະ ຄູ່ມືການຮຽນ-ການສອນຂອງຄູ ແລະ ປຶ້ມແບບຮຽນໂພຊະນາການສໍາລັບນັກຮຽນຈາກອົງການກາແດງສະວິດສ ແລະ ອົງການກາແດງລາວ.
4. ຫຼັກສູດສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ ແລະ ປຶ້ມຄູ່ມືສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ **SRH** ຈາກ ສະຫະປະຊາຊາດ ກອງທຶນເພື່ອປະຊາກອນ **UNFPA,** ຊີເອສອີ **CSE** ແລະ ອົງການສາກົນ ບໍລິການປະຊາຊົນ **PSI Laos** "ຮັກມີແຜນ"

ພວກເຮົາໄດ້ດັດແກ້ເລັກນ້ອຍເພື່ອໃຫ້ເຂົ້າກັບສະພາບ, ເປົ້າໝາຍ ແລະ ໄລຍະເວລາຂອງໂຄງການຮ່ວມມືປັບປຸງດ້ານໂພຊະນາການ.

ກິດຈະກໍາ ແລະ ອຸປະກອນຕ່າງໆຈະໄດ້ນໍາໄປທົດສອບຢູ່ໃນພາກສະໜາມ ກ່ອນທີ່ຈະສັງລວມລົງໃນປຶ້ມຄູ່ມືການຝຶກອົບຮົມບົດຮຽນເຫຼັ້ມນີ້.

ໃນນີ້ ພວກເຮົາຕ້ອງການຮັບຮອງເອົາການສະໜັບສະໜູນຈາກອົງການກາແດງສະວິດສ ແລະ ອົງການກາແດງລາວ. ອົງການອາຫານໂລກ **WFP,** ອົງການ ອີຟັດ **IFAD,** ສະຫະປະຊາຊາດ ກອງທຶນເພື່ອປະຊາກອນ **UNFPA,** ອົງການສາກົນ ບໍລິການປະຊາຊົນ **PSI Laos** ແລະ ອົງການຊ່ວຍເຫຼືອເດັກສາກົນ ປະຈໍາ ສປປ ລາວ **SCI -** ທີມງານປົກປ້ອງເດັກທີ່ອະນຸຍາດໃຫ້ພວກເຮົານໍາໃຊ້ສື່ອຸປະກອນການຝຶກອົບຮົມວິທີການສໍາລັບໂຮງຮຽນມັດທະຍົມຕອນຕົ້ນຂອງໂຄງການການຮ່ວມມືປັບປຸງດ້ານໂພຊະນາການ.

ພວກເຮົາຈຶ່ງຖືໂອກາດນີ້ສະແດງຄວາມຮູ້ບູນຄຸນມາຍັງຄູ່ຮ່ວມງານຂອງໂຄງການຮ່ວມມືປັບປຸງດ້ານໂພຊະນາການທຸກທົ່ວໜ້າເປັນຕົ້ນແມ່ນອົງການແຄຣ໌ ນານາຊາດ ປະຈໍາ ສປປ ລາວ **CARE,** ອົງການຮ່ວມມືກັບປະເທດລາວ **CCL**

ແລະ ກອງທຶນຊ່ວຍເຫຼືອເດັກ ແລະ ທີມງານອົງການຊ່ວຍເຫຼືອເດັກສາກົນ **SCI** ທີ່ຊີ້ນໍາ ແລະ ໃຫ້ການສະໜັບສະໜູນໃນການອອກແບບປຶ້ມຄູ່ມືການຝຶກອົບຮົມເຫຼັ້ມນີ້.

ພວກເຮົາເຊື່ອວ່າປຶ້ມຄູ່ມືຝຶກອົບຮົມເຫຼັ້ມນີ້ຄືຈະມີປະໂຫຍດຕໍ່ກັບບັນດາຄູຝຶກ, ອາຈານ ແລະ ກຸ່ມເພື່ອນສອນເພື່ອນສໍາລັບການຝຶກອົບຮົມວຽກງານທາງການປະພຶດຢ່າງມີປະສິດທິຜົນ. ການຝຶກອົບຮົມບາງຢ່າງຈະໃຊ້ເວລາຍາວນານ ແລະ ເປັນວິທີການແບບຕໍ່ເນື່ອງເຊິ່ງຕ້ອງໄດ້ມີການທົບທວນຄືນ ແລະ ມີການດັດແກ້ວິທີການຕ່າງໆຄືສາລະບານ ແລະ ວິທີການສິດສອນ ດັ່ງນັ້ນ ພວກເຮົາຈຶ່ງຕ້ອງການນິຍາມປຶ້ມຄູ່ມືເຫຼັ້ມນີ້ເປັນດັ່ງໂຄງຮ່າງການເຮັດວຽກເພື່ອພວກເຮົາຈະສາມາດເປີດໂອກາດໃນການໃຫ້ຄໍາແນະນໍາ, ດັດແກ້ ແລະ ປ່ຽນແປງໄປຕາມຄວາມຮຽກຮ້ອງຕ້ອງການຂອງໂຄງການ ແລະ ຊຸມຊົນ.

### ໂຄງການຮ່ວມມືປັບປຸງດ້ານໂພຊະນາການ

ຢູ່ໃນປະເທດເຮົາ ເດັກນ້ອຍຈໍານວນຫຼວງຫຼາຍໄດ້ຮັບຜົນກະທົບຈາກການຂາດສານອາຫານ ນັ້ນໝາຍເຖິງການຈະເລີນເຕີບໂຕ ແລະ ການພັດທະນາການຂອງເຂົາບໍ່ເປັນໄປຕາມເກນອາຍຸຂອງພວກເຂົາ. ເພາະສະນັ້ນ ຄູ່ຮ່ວມງານກັບລັດຖະບານ, ອົງການຊ່ວຍເຫຼືອເດັກສາກົນ ປະຈໍາ ສປປ ລາວ **SCI** ແລະ ຄູ່ຮ່ວມງານອື່ນໆຈຶ່ງໄດ້ເປີດກອງປະຊຸມສໍາມະນາໂຄງການການຮ່ວມມືປັບປຸງໂພຊະນາການ ເພື່ອກ່າວຄໍາປາໄສກ່ຽວກັບບັນຫາການຂາດສານອາຫານເຫຼົ່ານີ້. ໃນເລື່ອງຂອງໂຄງການການຮ່ວມມືປັບປຸງດ້ານໂພຊະນາການ **'SCALING'** ທີ່ຫຍໍ້ມາຈາກ **(Sustainable change Achieved by Linking Improved Nutrition and Governance)** ເຊິ່ງເປັນໂຄງການຂອງບັນດາຂະແໜງການຕ່າງໆເພື່ອປັບປຸງຄວາມປອດໄພຂອງອາຫານ ແລະ ໂພຊະນາການໃຫ້ຈໍານວນຫົວໜ່ວຍຄົວເຮືອນໃນເຂດຊົນນະບົດພາຍໃນ 14 ເມືອງທີ່ຖືກຄັດເລືອກເປັນເປົ້າໝາຍໃນ ແຂວງ ຫົວພັນ, ຫຼວງນໍ້າທາ, ຫຼວງພະບາງ ແລະ ຜົ້ງສາລີທາງພາກເໜືອຂອງ ສ ປປ ລາວ. ໂຄງການໄດ້ຮັບການສະໜັບສະໜູນທຶນໂດຍສະຫະພັບເອີຣົບ(**EU**) ແລະ ໄດ້ຮັບການຈັດຕັ້ງປະຕິບັດໂດຍກຸ່ມຄູ່ຮ່ວມງານ 4ອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານຄື: ອົງການແຄຣ໌ ນານາຊາດປະຈໍາ ສປປ ລາວ **CARE,** ອົງການຮ່ວມມືກັບປະເທດລາວ **CCL,** ອົງການກອງທຶນຊ່ວຍເຫຼືອເດັກ **CFL,** ແລະອົງການຊ່ວຍເຫຼືອເດັກສາກົນ ປະຈໍາ ສປປ ລາວ **SCI** ເຊິ່ງເປັນຄູ່ຮ່ວມງານທີ່ນໍາພາທາງ. ຈຸດປະສົງອັນຕົ້ນຕໍແມ່ນເລັ່ງໃສ່ກຸ່ມໄວໜຸ່ມຍິງ ແລະ ຊາຍ. ວິທີການຮຽນແບບເປັນກຸ່ມເພື່ອນສອນເພື່ອນອາດຈະຖືກນໍາໃຊ້ເພື່ອປູກຈິດສໍານຶກ ແລະ ປ່ຽນແປງພຶດຕິກໍາໃນກຸ່ມໄວໜຸ່ມກ່ຽວກັບວຽກງານດ້ານໂພຊະນາການ, ສຸຂະອະນາໄມ, ສຸຂະພາບທາງເພດ ແລະ ສຸຂະພາບຈະ ເລີນພັນ ແລະ ບົດບາດ ຍິງ-ຊາຍ. ການຮຽນແບບເປັນກຸ່ມເພື່ອນສອນເພື່ອນຈະໄດ້ຮັບການຈັດຕັ້ງປະຕິບັດໂດຍເດັກຍິງ ແລະ ເດັກຊາຍທີ່ຖືກເລືອກຢູ່ໃນໂຮງຮຽນມັດທະຍົມຕອນຕົ້ນໃນຂົງເຂດຂອງໂຄງການເພື່ອຮ່ວມກັນຮຽນຮູ້ຫົວຂໍ້ຕ່າງໆດ້ວຍການເຮັດກິດຈະກໍາທີ່ສະໜຸກສະໜານ.

### ກິດຈະກໍາຂອງໂຄງການຮ່ວມມືປັບປຸງດ້ານໂພຊະນາການຢູ່ໃນໂຮງຮຽນມັດທະຍົມຕອນຕົ້ນ

ການຮຽນແບບເປັນກຸ່ມເພື່ອນສອນເພື່ອນຈະໄດ້ຈັດຂຶ້ນສອງຄັ້ງພາຍໃນແຕ່ລະເດືອນຕິດຕໍ່ກັນໃນລະຫວ່າງສອງສາມເດືອນ.

ໃນທຸກໆກິດຈະກໍາແມ່ນເພື່ອແນໃສ່ການພັດທະນາທັກສະດ້ານຄວາມຮູ້, ຄຸນສົມບັດ, ຄວາມເຊື່ອຖື ແລະ ທັກສະດ້ານອື່ນໆຂອງກຸ່ມໄວໜຸ່ມ ຍິງ-ຊາຍ (ເດັກໃນເກນອາຍຸ 10-14 ປີ ຫຼື ນັກຮຽນ ຊັ້ນ ມ1- ມ3) ເພື່ອເຮັດໃຫ້ເຂົາເຈົ້າມີຄວາມຮັບຜິດຊອບຕໍ່ສຸຂະພາບຂອງຕົນເອງ. ສິ່ງທ້າທາຍຕ່າງໆອາດຈະເປັນເປົ້າໝາຍທັງເດັກຍິງ ແລະ ຊາຍ ເພາະວ່າການຕອບສະໜອງຄວາມຕ້ອງການທາງດ້ານໂພຊະນາການ ແລະ ສິ່ງທ້າທາຍໃນເລື່ອງບົດບາດ ຍິງ-ຊາຍ ເປັນ

ບັນທັດຖານທີ່ຈໍາເປັນທີ່ຈະຕ້ອງໄດ້ມີສ່ວນຮ່ວມທັງສອງເພດໄປພ້ອມໆກັນ. ແຕ່ລະກຸ່ມຂອງກອງປະຊຸມໄວໜຸ່ມຍິງ-ຊາຍຈະຕ້ອງປະກອບມີຫົວຂໍ້ສະເພາະທີ່ຈະນໍາມາສົນທະນາ. ສິ່ງທ້າທາຍເຫຼົ່ານີ້ອາດຈະຊ່ວຍໃຫ້ໄວໜຸ່ມ ຍິງ-ຊາຍ ໄດ້ມີໂອກາດເປີດອົກເປີດໃຈພ້ອມໄຂຂໍ້ສົງໃສຂອງຕົນເອງຕໍ່ກັບບັນຫາຕ່າງໆໃຫ້ແຈ່ມແຈ້ງຂຶ້ນ ພ້ອມທັງຍັງສາມາດແກ້ໄຂຄວາມກັງວົນໃຈຕ່າງໆໂດຍຜ່ານຄວາມຈິງທາງວິທະຍາສາດ. ເພື່ອເຮັດໃຫ້ວິທີການດັ່ງກ່າວມີຄວາມຕື່ນເຕັ້ນຈະຕ້ອງໄດ້ນໍາໃຊ້ສື່ອຸປະກອນຕ່າງໆເຊັ່ນ: ການເລົ່າເລື່ອງ, ວິດີໂອ, ຮູບເງົາ, ສິລະປະ ແລະ ຫັດຖະກໍາ (ກາຕູນ, ອື່ນໆ), ລະຄອນ, ການສະແດງບົດບາດສົມມຸດ ແລະ ອື່ນໆ. ເດັກນັກຮຽນຈະມີຄວາມມ່ວນຊື່ນ, ກະຕືລືລົ້ນໃນການຮໍ່າຮຽນເພື່ອປ່ຽນແປງພຶດຕິກໍາຂອງເຂົາເຈົ້າ.

ບົດຮຽນເຫຼົ່ານີ້ອາດຈະໄດ້ນໍາໃຊ້ໃນເວລາເຮັດກິດຈະກໍາເພື່ອນສອນເພື່ອນໃນຫ້ອງຮຽນ.

| ລາຍລະອຽດຂອງບົດຮຽນ | |
|---|---|
| **1** | ວົງມົນແຫ່ງມິດຕະພາບ/ຮູ້ຈັກເຊິ່ງກັນ ແລະ ກັນ |
| **2** | ຄວາມສະເໝີພາບບົດບາດຍິງ-ຊາຍ ແລະ ໄວໜຸ່ມເປັນຕົວແທນໃນການປ່ຽນແປງ |
| **3** | ໂພຊະນາການ (ພາກທີ່ 1) |
| **4** | ໂພຊະນາການ (ພາກທີ່ 2) |
| **5** | ໂພຊະນາການ (ພາກທີ່ 3) |
| **6** | ເພດສຶກສາ ແລະ ສຸຂະພາບຈະເລີນພັນ |
| **7** | ນໍ້າ, ສຸຂາພິບານ ແລະ ສຸຂະອະນາໄມສ່ວນບຸກຄົນ |

# ສາລະບານ

1. ຄຳນຳ.....5

ກິດຈະກຳ 1.1 ຄວາມເຂົ້າໃຈກ່ຽວກັບຕົນເອງສຳເດັກຍິງ.....6

ກິດຈະກຳ 2.1 ອະນາໄມຮ່າງກາຍເມື່ອເປັນປະຈຳເດືອນ..... 10

ກິດຈະກຳ 3.1 ວິທີປ້ອງກັນການຕັ້ງຄັນ) ການມີເພດສຳພັນທີ່ປອດໄພ..... 12

ກິດຈະກຳ 4.1 ພະຍາດຕິດຕໍ່ທາງເພດສຳພັນ STIs ແລະ ເອດສ໌ໄອວີ 'ເຊື້ອເອດສ໌' HIVs..... 14

2. ບົດທີ່ 6: ເພດສຶກສາ ແລະ ສຸຂະພາບຈະເລີນພັນ(SRH)..... 17

3. ພາກທີ່ 2..... 17

4. (ສຳລັບເດັກກຊາຍ)..... 17

5. ບົດທີ່ 6 ເພສຶກສາດ ແລະ ສຸຂະພາບຈະເລີນພັນ (ສຳລັບເດັກກຊາຍ)..... 17

6. ຄຳນຳ..... 17

ກິດຈະກຳ 1.1 ຄວາມເຂົ້າໃຈກ່ຽວກັບຕົນເອງສຳລັບເດັກຊາຍ..... 18

ກິດຈະກຳ 2.1 ວິທີປ້ອງກັນການຕັ້ງຄັນ (ການມີເພດສຳພັນທີ່ປອດໄພ)..... 22

ກິດຈະກຳ 3.1 ພະຍາດຕິດຕໍ່ທາງເພດສຳພັນ STIs ແລະ ເອດສ໌ໄອວີ 'ເຊື້ອເອດສ໌' HIVs..... 24

ກິດຈະກຳ 4.1 ການສະໜັບສະໜູນບົດບາດຂອງເພດຊາຍ..... 26

## ຄຳນຳ

**ການສຶກສາກ່ຽວກັບເພດ** ແມ່ນເວົ້າກ່ຽວກັບການຈະເລີນເຕີບໂຕ ແລະ ທຸກໆສິ່ງທີ່ກ່ຽວພັນກັບການຈະເລີນເຕີບໂຕ. ເຊິ່ງເວົ້າກ່ຽວກັບເລື່ອງການປ່ຽນແປງຂອງຮ່າງກາຍ ແລະ ມັນສະໝອງໃນເວລາທີ່ພວກເຮົາເຕີບໃຫຍ່ຂຶ້ນ ແລະ ເວົ້າກ່ຽວກັບວິທີການປົກປ້ອງສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ ລວມໄປເຖິງການປົກປ້ອງການລ່ວງລະເມີດທາງເພດ. ຈຸດປະສົງແມ່ນເພື່ອໃຫ້ຄວາມຮູ້ ແລະ ທັກສະແກ່ກຸ່ມໄວໜຸ່ມເພື່ອໃຫ້ມີການຕັດສິນໃຈທີ່ມີສຸຂະພາບແຂງແຮງ ແລະ ໄດ້ຮັບການບໍລິການທີ່ດີ ດັ່ງນັ້ນ ພວກເຂົາຈຶ່ງຈະໄດ້ມີສຸຂະພາບທີ່ແຂງແຮງໃນອະນາຄົດ.

ໄວໜຸ່ມຕ້ອງເຂົ້າໃຈເຖິງຂໍ້ມູນຂ່າວສານທີ່ແນ່ນອນເພື່ອຈະໄດ້ກະກຽມຕັດສິນໃຈທີ່ຈະມີສຸຂະພາບແຂງແຮງຕາມສະຖານະການໂດຍສະເພາະ.

ການສຶກສາກ່ຽວກັບເພດແມ່ນຈະໄດ້ຂຽນຂຶ້ນເພື່ອເດັກຍິງ ແລະ ເດັກຊາຍມີໄວ້ເພື່ອສຶກສາ. ໃນອະດີດ ຮູບແບບການສຶກສາລັກສະນະນີ້ແມ່ນສຸມໃສ່ສະເພາະແມ່ນເດັກຍິງເທົ່ານັ້ນ. ມີຫຼາຍໆຄົນເຄີຍມີຄວາມເຊື່ອວ່າເດັກຊາຍບໍ່ຈຳເປັນທີ່ຈະຕ້ອງມີຄວາມຮູ້ ແລະ ທັກສະຕ່າງໆກ່ຽວກັບເລື່ອງນີ້ ເພາະມັນບໍ່ໄດ້ກ່ຽງຂ້ອງກັບສຸຂະພາບຂອງພວກເຂົາ. ເຖິງຢ່າງໃດກໍຕາມ ປະຈຸບັນນີ້ອດັ່ງພວກເຮົາຮູ້ແລ້ວວ່າເດັກຊາຍ ແລະ ຊາຍທີ່ເປັນໄວໜຸ່ມຈຳເປັນຈະຕ້ອງໄດ້ມີຄວາມຮູ້ ແລະ ທັກສະດັ່ງກ່າວນີ້ເພື່ອໃຫ້ມີສຸຂະພາບແຂງແຮງ ແລະ ມີສາຍພົວພັນທາງດ້ານສຸຂະພາບທີ່ແຂງແຮງ.

ມັນຍັງເປັນໂອກາດສຳລັບກຸ່ມໄວໜຸ່ມທີ່ຈະຕ້ອງໄດ້ຮຽນຮູ້ກ່ຽວກັບພະຍາດຕິດຕໍ່ທາງເພສຳພັນ (STIs) ເຊິ່ງລວມທັງ ເອດສ໌ໄອວີ HIV. ພະຍາດຕິດຕໍ່ທາງເພສຳພັນ ສາມາດຕິດຕໍ່ໄດ້ໂດຍທາງທາດແຫຼວທີ່ມີໃນຮ່າງກາຍຂອງຄົນເຮົາເຊັ່ນ: ນ້ຳອະສຸຈິ, ນ້ຳເມືອກໃນຊ່ອງຄອດ ແລະ ທາງເລືອດ. ການປ້ອງກັນທີ່ບໍ່ປອດໄພກໍສາມາດຕິດເຊື້ອເອດສ໌ໄດ້, ແຕ່ແນ່ນອນຢູ່ແລ້ວ ຖ້າມີຄູ່ນອນຫຼາຍຄົນກໍຍິ່ງມີຄວາມສ່ຽງເພີ່ມຂຶ້ນ. ພະຍາດຕິດຕໍ່ທາງເພດສຳພັນ STIs ບາງຊະນິດກໍສາມາດປິ່ນປົວໃຫ້ຫາຍຂາດໄດ້ ແຕ່ບາງຊະນິດພຽງແຕ່ສາມາດຮັກສາໄດ້ແຕ່ບໍ່ຫາຍຂາດ. ເຖິງຢ່າງໃດກໍຕາມ ຖ້າບໍ່ຮັກສາໃຫ້ທັນເວລາພວກມັນກໍ່ຈະມີອາການຮ້າຍແຮງຂຶ້ນເລື້ອຍໆ, ມັນຈະໄປທຳລາຍອະໄວຍະວະສືບພັນຕ່າງໆໃນຮ່າງກາຍ ແລະ ເປັນສາເຫດເຮັດໃຫ້ເປັນໝັນ. ວິທີການປ້ອງກັນພະຍາດຕິດຕໍ່ທາງເພດສຳພັນ STIs ທີ່ດີທີ່ສຸດແມ່ນການຍົກເວັ້ນການມີເພດສຳພັນ ຫຼື ເວລາມີເພດສຳພັນຕ້ອງໄດ້ປ້ອງກັນ.

ການຮຽນຄວາມຮູ້ ແລະ ທັກສະທີ່ຈຳເປັນໃນເກນອາຍຸນີ້ຄືຈະມີຜົນປະໂຫຍດແກ່ເດັກນ້ອຍໃນເວລາທີ່ພວກເຂົາໃຫຍ່ຂຶ້ນມາ ແລະ ຈະໄດ້ກະກຽມວິທີປ້ອງກັນພະຍາດຕິດຕໍ່ທາງເພດສຳພັນ ພ້ອມທັງການຊອກຫາບ່ອນຮັກສາໃນທາງທີ່ ເໝາະສົມ ແລະ ທັນເວລາ.

| ແຜນກພູມການນຳສະເໜີກິດຈະກຳ ຫຼື ພາກຕ່າງໆຂອງບົດຮຽນ | | |
|---|---|---|
| **ລຳດັບກິດຈະກຳ** | **ຊື່ກິດຈະກຳ** | **ໄລຍະເວລາ** |
| **1.1** | ຄວາມເຂົ້າໃຈກ່ຽວກັບຕົນເອງສຳລັບເດັກຍິງ | 60 ນາທີ (ພັກຜ່ອນ10 ນາທີ) |
| **2.1** | ສຸຂະອະນາໄມການເປັນປະຈຳເດືອນ | 20 ນາທີ |
| **3.1** | ວິທີປ້ອງກັນການຕັ້ງຄັນ(ການມີເພດສຳພັນທີ່ປອດໄພ) | 20 ນາທີ |
| **4.1** | ພະຍາດຕິດຕໍ່ທາງເພດສຳພັນSTIs ແລະ ເອດສ໌ໄອວີ HIVs | 20 ນາທີ |
| | | **120** ນາທີ |

**ການກະກຽມອຸປະກອນໂດຍລວມ**: ພິມເອກະສານຊ້ອນທ້າຍ **SRH** , ວີດີໂອ**,** ປຶ້ມນ້ອຍ, ປ້າຍຮູບຮ່າງຂອງເພດຍິງ ແລະ ເພດຊາຍ, ສະຕິກເກີອະໄວຍະວະເພດຊາຍ ແລະ ອະໄວຍະເພດຍິງ, ຜ້າອະນາໄມ(ໂກເຕັກ), ສະບູ ແລະ ຊຸດຊັ້ນໃນ(ສະລິບ).

**ເວລາ**: 120 ນາທີ (ລວມທັງເວລາພັກຜ່ອນ)

**ຄຳແນະນຳໂດຍລວມຂອງບົດຮຽນ:**

ສຳລັບໂມດູນສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນສຳລັບເດັກຍິງ ແລະ ເດັກຊາຍ ແມ່ນຈະແຍກກຸ່ມກັນ. ໃນເວລາເຮັດກິດຈະກຳນັກຮຽນຍິງແມ່ນຈະໄດ້ຢູ່ກັບອາຈານຍິງ ແລະ ນັກຮຽນຊາຍແມ່ນຈະໄດ້ຢູ່ກັບອາຈານຊາຍ.

## ກິດຈະກຳ 1.1 ຄວາມເຂົ້າໃຈກ່ຽວກັບຕົນເອງສຳເດັກຍິງ

**ຄຳແນະນຳສຳລັບຜູ້ນຳພາກິດຈະກຳເພື່ອນສອນເພື່ອນ:**

**ພາກຄຳແນະນຳສຳລັບກິດຈະກຳ:** ໃນກິດຈະກຳນີ້ ເຈົ້າຈະໄດ້ຊ່ວຍແນະນຳສະມາຊິກພາຍໃນກຸ່ມຂອງເຈົ້າຮຽນຮູ້ກ່ຽວກັບການຈະເລີນເຕີບໂຕ. ພວກເຂົາຈະເຂົ້າໃຈວ່າຮ່າງກາຍ ແລະ ຈິດຕະວິທະຍາຂອງເດັກຍິງ ແລະ ເດັກຊາຍມີການປ່ຽນແປງເມື່ອພວກເຂົາໃຫຍ່ຂຶ້ນ ແລະ ການປ່ຽນແປງດັ່ງກ່າວນີ້ມັນເປັນເລື່ອງປົກກະຕິ.

ການຈະເລີນເຕີບໂຕຈະມີຄວາມແຕກຕ່າງໄປຕາມແຕ່ລະໄລຍະເຊິ່ງໃນຊ່ວງອາຍຸ 10 ປີ -19 ປີ ເຮົາເອີ້ນວ່າກຸ່ມໄວໜຸ່ມ. ໃນຊ່ວງໄລຍະອາຍຸ 10-14 ປີ ມັນເປັນຊ່ວງພິເສດຫຼາຍ ແລະ ໃນຊ່ວງໄລຍະນີ້ຮ່າງກາຍ, ມັນສະໝອງ ແລະ ຄວາມຮູ້ສຶກຈະມີການປ່ຽນແປງ ແລະ ຂະຫຍາຍຕົວ. ເຊິ່ງການປ່ຽນແປງທັງໝົດເຫຼົ່ານີ້ເອີ້ນວ່າ "**ໄວຈະເລີນພັນ** '**ກາຍເປັນຜູ້ໃຫຍ່**'" ສິ່ງດັ່ງກ່າວນີ້ໝາຍເຖິງວ່າເຈົ້າຈະບໍ່ໄດ້ເປັນເດັກນ້ອຍອີກຕໍ່ໄປ ແຕ່ກໍຍັງບໍ່ໄດ້ໝາຍຄວາມວ່າເປັນຜູ້ໃຫຍ່ພຽງພໍ. ໃນຊ່ວງນີ້ເປັນໄລຍະທີ່ມີຄວາມທ້າທາຍ ແລະ ມີຄວາມສັບສົນຫຼາຍ ແຕ່ມັນກໍເປັນໜ້າຕື່ນເຕັ້ນ. ທີ່ເຈົ້າກຳລັງໃຫຍ່ຂຶ້ນ**!** ຮ່າງກາຍປ່ຽນແປງແມ່ນເປັນໜ້າສັນລະເສີນຫຼາຍກວ່າຄວາມຢ້ານກົວ ເພາະວ່າພວກມັນເປັນສັນຍານເຕືອນວ່າ ທ່ານກຳລັງກ້າວໄປຂ້າງໜ້າກັບຊີວິດ**.**

**ເວລາ: 60 ນາທີ** (ພັກຜ່ອນ 10 ນາທີ)

**ການກະກຽມອຸປະກອນ:**

- **ພິມ**ຮູບຮ່າງເປືອຍກາຍຂອງເພດຊາຍ ແລະ ເພດຍິງອອກມາ(ໂດຍອີງໃສ່ເອກະສານຊ້ອນທ້າຍ **SRH**)
- **ປ້າຍຮູບຮ່າງ**ຮ່າງກາຍຂອງເພດຊາຍ ແລະ ເພດຍິງ
- **ໂປດສເຕີ** ການປ່ຽນແປງຮູບຮ່າງພາຍນອກຂອງເດັກຍິງ ແລະ ເດັກຊາຍ
- **ສະຕິກເກີ** ອະໄວຍະວະສືບພັນ, ຈຸລັງໄຂ່, ເມັດເລືອດ ແລະ ຈຸລັງເຊື້ອຂອງເພດຊາຍ ແລະ ເພດຍິງ

## ເລີ່ມກິດຈະກຳ

1. **ພາກຄຳແນະນຳກ່ຽວກັບບົດຮຽນ. ອ່ານໃຫ້ດັງ:** ມື້ນີ້ພວກເຮົາຈະໄດ້ເວົ້າກ່ຽວກັບການປ່ຽນແປງຂອງຮ່າງກາຍທີ່ພວກເຮົາເຄີຍເປັນມາກ່ອນໜ້ານີ້ (ທັງພາຍໃນ ແລະ ພາຍນອກ) ແລະ ຄວາມຮູ້ສຶກໃນເວລາພວກເຮົາເຕີບໃຫຍ່ຂຶ້ນ.

   ຈາກນັ້ນ ພວກເຮົາຍັງຈະໄດ້ຮຽນຮູ້ກ່ຽວກັບການມີປະຈຳເດືອນ ແລະ ການຕັ້ງຄັນ(ການຖືພາ).
2. **ເວົ້າວ່າ**....ເມື່ອພວກເຮົາໃຫຍ່ຂຶ້ນ, ຮ່າງກາຍຂອງພວກເຮົາກໍ່ຈະເລີ່ມມີການປ່ຽນແປງ. ເບື້ອງຕົ້ນໃຫ້ພວກເຮົາມາເວົ້າກ່ຽວກັບການປ່ຽນແປງທາງພາຍນອກກ່ອນ.

3. **ຈັດແບ່ງ**ນັກຮຽນອອກເປັນສອງກຸ່ມ ພ້ອມຢາຍຮູບຮ່າງ ຂອງເພດຍິງໃຫ້ກຸ່ມໜຶ່ງ ແລະ ຢາຍຮູບຮ່າງຂອງເພດຊາຍໃຫ້ອີກກຸ່ມໜຶ່ງ.
4. ຈາກນັ້ນ**ແນະນຳ**ໃຫ້ພວກເຂົາແຕ້ມການປ່ຽນແປງ(ທາງດ້ານຮ່າງກາຍ)ທີ່ພວກເຂົາເຊື່ອວ່າມັນຈະເກີດຂຶ້ນກັບເດັກຍິງ ແລະ ເດັກຊາຍໃນຂະນະທີ່ພວກເຂົາເຕີບໃຫຍ່ຂຶ້ນ.
5. **ໃຫ້**ເວລາພວກເຂົາ 5 ນາທີເພື່ອແຕ້ມໃຫ້ສຳເລັດ. ຫຼັງຈາກ ແຕ້ມສຳເລັດແລ້ວໃຫ້ພວກເຂົານຳເອົາພາຍທີ່ພວກເຂົາແຕ້ມນັ້ນຂຶ້ນມານຳສະເໜີ. ຈາກນັ້ນ ສະເຫຼີຍຄຳຕອບທີ່ຖືກຕ້ອງໃຫ້ແກ່ພວກເຂົາ.

| ການປ່ຽນແປງຮູບຮ່າງພາຍນອກ | |
|---|---|
| **ເດັກຍິງ** | **ເດັກຊາຍ** |
| ເຈົາຈະເຕີບໂຕສູງຂືນ | ຈະເຕີບໂຕສູງຂຶ້ນ |
| ສະໂພກຈະໃຫຍ່ຂືນ | ໜ້າເອິກຈະໃຫຍ່ຂຶ້ນ |
| ສຽງຂອງເຈົາຈະປ່ຽນ | ສຽງຈະແຫບ |
| ເຕົານົມຈະໃຫຍ່ຂືນ | ຂົນຈະປົ່ງຂຶ້ນຢູ່ຕາມຂີ້ແຮ້ ແລະ ຈຸດລັບຕ່າງໆ. ສຳລັບເດັກຊາຍບາງຄົນຈະປົ່ງຂຶ້ນບໍລິເວນໃບໜ້າ ແລະ ໜ້າເອິກ |
| ຈະມີຂົນປົ່ງຂືນຢູ່ຈຸດລັບ(ໝອຍ) | ເຈົ້າອາດຈະຝັນປຽກ(ຝັນວ່າໄດ້ມີເພດສຳພັນກັບໃຜຜູ້ໜຶ່ງເຮັດໃຫ້ມີນ້ຳອະສຸຈິຫຼັ່ງອອກມາ) |
| ຈະເລີ່ມມີປະຈຳເດືອນ | ຈະເລີ່ມມີເຫື່ອຫຼາຍຂຶ້ນ |
| ຈະເລີ່ມມີເຫືອຫຼາຍຂືນ | ໃບໜ້າຂອງເຈົ້າຈະມັນຂຶ້ນ ເຊິ່ງເປັນຕົ້ນເຫດຂອງການເກີດເປັນສິວ |
| ໃບໜ້າຂອງເຈົາຈະມັນຂືນ ເຊິງເປັນຕົນເຫດຂອງການເກີດເປັນສິວ | |

6. **ສົມທຽບ**ຮູບພາບທີ່ພວກເຂົາແຕ້ມໃສ່ຕາຕະລາງຂ້າງເທິງນັ້ນ ແລ້ວຕື່ມຂໍ້ມູນຕ່າງໆໃສ່ຕາມຄວາມຕ້ອງການ.
7. **ອ່ານໃຫ້ຟັງ:** ດຽວນີ້ ຂ້ອຍຕ້ອງການໃຫ້ເຈົ້າເວົ້າກ່ຽວກັບການປ່ຽນແປງທາງອາລົມ(ຄວາມຮູ້ສຶກ)ທີ່ເກີດຂຶ້ນໃນສະມາຊິກຂອງເພດກົງກັນຂ້າມ. ອາລົມແມ່ນຄວາມຮູ້ສຶກເຊັ່ນວ່າ ຄວາມດີໃຈ ຫຼື ເສຍໃຈ.

- ມື້ໜຶ່ງຮູ້ສຶກດີໃຈ ແລະ ມື້ໜຶ່ງຮູ້ສຶກເສຍໃຈໃນທັນທີ ຫຼື ມື້ຕໍ່ມາຮູ້ສຶກວ່າສັບສົນ
- ຮູ້ສຶກລະອຽດອ່ອນຖ້າປຽບທຽບກັບຕົນເອງ ແລະ ໝູ່ເພື່ອນ
- ຮູ້ສຶກວ່າຕ້ອງການເຮັດໃຫ້ຄົນອື່ນເພິ່ງພໍໃຈ ແລະ ຮູ້ສຶກບໍ່ແຕກຕ່າງຈາກເພື່ອນໆ
- ຮູ້ສຶກຕ້ອງການໃຫ້ຄົນອື່ນເຂົ້າໃຈຄວາມຮູ້ສຶກຂອງຕົນເອງ
- ຮູ້ສຶກຢາກສ້າງຄວາມດຶງດູດເພດຕົງກັນຂ້າມ

8. **ເວົ້າວ່າ** ດຽວນີ້ ມາເວົ້າກ່ຽວກັບການປ່ຽນແປງທາງພາຍໃນຮ່າງກາຍ:
9. **ຕິດ** ແຜນປ້າຍຮູບຮ່າງຂອງຮ່າງກາຍຂອງເພດຍິງ ແລະ ເພດຊາຍໄວ້ເທິງຝາ
10. **ເຊື້ອເຊີນ** ກຸ່ມພ້ອມທັງແນະນຳໃຫ້ເຂົາເລືອກສະຕິກເກີອະໄວຍະວະເພດຍິງ ແລະ ເພດຊາຍຈາກກ່ອງບັນຈຸສະຕິກເກີ ແລ້ວນຳມາຕິດແປະໃສ່ປ້າຍຮູບຮ່າງຂອງຮ່າງກາຍ.
11. **ກວດກາ ແລະ ຕິດສະຕິກເກີ**ຢ່າງຖືກຕ້ອງ ຖ້າເຫັນວ່າຈຳເປັນ.

**12.ອ່ານໃຫ້ດັງ :**ໃນເບື້ອງຕົ້ນ ,ພວກເຮົາຈະອະທິບາຍກ່ຽວກັບໜ້າທີ່ຂອງອະໄວຍະວະຕ່າງໆໃນຮ່າງກາຍຂອງເພດຍິງ ແລະ ຕໍ່ໄປພວກເຮົາຈະໄດ້ເວົ້າກ່ຽວກັບບົດບາດຂອງອະໄວຍະວະໃນຮ່າງກາຍຂອງເພດຊາຍ.

**ຈຸລັງໄຂ່**




**ທໍ່ສົ່ງໄຂ່:** ໄຂ່ເດີນທາງຈາກຮອຍໄຂ່ໄປຫາມົດລູກດ້ວຍທໍ່ສົ່ງໄຂ່

**ຮອຍໄຂ່:** ສິ່ງເຫຼົ່ານີ້ຜະລິດໄຂ່. ມີຮອຍໄຂ່ໃນ 2ຟາກຂ້າງຂອງປີກມົດລູກ.

**ມົດລູກ:** ມັນເປັນກ້າມເນື້ອເປັນຜົ້ງ ເລືອດປະຈຳເດືອນຂອງເຈົ້າແມ່ນມາຈາກມົດລູກ ແລະ ມັນເປັນບ່ອນທີ່ເດັກນ້ອຍມີການຈະເລີນເຕີບໂຕຖ້າເຈົ້າຖືພາ.

**ອະໄວຍະວະເພດຍິງ(ຫີ):** ສິ່ງດັ່ງກ່າວນີ້ເປັນບ່ອນທີ່ເລືອດປະຈຳເດືອນຕົກອອກມາທາງນອກ. ນອກນັ້ນ ມັນຍັງເປັນບ່ອນຜະລິດນ້ຳເມືອກທີ່ຊ່ວຍໃຫ້ບໍລິເວນຊ່ອງຄອດສະອາດ.

**13.ເວົ້າວ່າ** ຮ່າງກາຍຂອງເຈົ້າເລີ່ມປ່ອຍຈຸລັງໄຂ່. ດັ່ງທີ່ສະແດງໃຫ້ເຫັນການຕົກຂອງຈຸລັງໄຂ່.

**14.ອ່ານໃຫ້ດັງ:** ຈຸລັງໄຂ່ຂອງເຈົ້າຈະມີການຕົກເດືອນລະຄັ້ງ. ໄຂ່ຈະຕົກຈາກຮອຍໄຂ່ ແລະ ເຄື່ອນຕົວຜ່ານທາງທໍ່ສົ່ງໄຂ່ໄປຫາມົດລູກ. ຖ້າຫາກໄຂ່ດັ່ງກ່າວບໍ່ໄດ້ຮັບການປະຕິສົນທິ(ປະສົມພັນ)ໄຂ່ກໍ່ຈະຕົກອອກຈາກຮ່າງກາຍເປັນປະຈຳເດືອນ. ເລືອດຈະໄຫຼອອກມາຈາກອະໄວຍະວະເພດຂອງເຈົ້າສິ່ງດັ່ງກ່າວນີ້ເອີ້ນວ່າ ປະຈຳເດືອນ.

**15.ເວົ້າວ່າ** ພວກເຮົາຈະເວົ້າກ່ຽວກັບປະຈຳເດືອນຂອງເຈົ້າອີກໃນຕອນຕໍ່ໄປ. ແຕ່ທຳອິດນີ້ ມາເວົ້າກ່ຽວກັບສິ່ງທີ່ເກີດຂຶ້ນຖ້າຫາກວ່າໄຂ່ໄດ້ຮັບການປະຕິສົນທິ(ປະສົມພັນ). ເລືອດຈະມີການເຄື່ອນຕົວນຳເອົາຈຸລັງໄຂ່ກັບຄືນໄປໃນທໍ່ສົ່ງໄຂ່.

**16.ເວົ້າວ່າ** ດຽວນີ້ ເຮົາມາເວົ້າກ່ຽວກັບອະໄວຍະວະເພດຊາຍ. ສິ່ງທີ່ເປັນຄວາມລັບຊາຍເຄື່ອນທີ່ຜ່ານອະໄວຍະວະເພດນັ້ນເອີ້ນວ່າ ນ້ຳອະສຸຈິ(ນ້ຳເຊື້ອ). ໃນທາດແຫຼວທີ່ເປັນຄວາມລັບດັ່ງກ່າວມັນຈະມີຈຸລັງທີ່ເອີ້ນວ່າ ເຊື້ອອະສຸຈິ(ນ້ຳກາມ) ຈຸລັງເຊື້ອອະສຸຈິມັນນ້ອຍຫຼາຍເຮົາບໍ່ສາມາດເບິ່ງເຫັນໄດ້ດ້ວຍຕາເປົ່າ ຫຼື ໂດຍປາສະຈາກກ້ອງຈຸລະທັດ. ສະແດງຮູບຈຸລັງເຊື້ອອະສຸຈິ




**17.****ເວົ້າວ່າ** ແມ່ນຫຍັງເກີດຂຶ້ນເມື່ອເຮົາເຕີບໃຫຍ່ຂຶ້ນມາ ແລະ ພວກເຮົາຄືກັບຄົນອື່ນເຂົາບໍ່**?**

*ຖ້າເບິ່ງວ່າຈະມີໃຜຕອບບໍ່.*

**ຈຸດທີ່ຕ້ອງໄດ້ອະທິບາຍ**: ຄົນຮັກກັນ... ແລະ ໃນເມື່ອພວກເຂົາຮູ້ສຶກວ່າເຂົາພ້ອມ ພວກເຂົາອາດຈະຕ້ອງການມີເພດສຳພັນ. ຕາມປົກກະຕິແລ້ວໃນເວລາມີເພດສຳພັນລະຫວ່າງເພດຊາຍ ແລະ ເພດຍິງຈະມີຫຍັງເກີດຂຶ້ນ? ອະໄວຍະວະເພດຊາຍຈະເຂົ້າໄປໃນອະໄວຍະວະເພດຍິງ.ໃນຂະນະດຽວກັນນີ້ ເພດຊາຍຈະມີຄວາມຮູ້ສຶກດີ(ເລົ້າໃຈ) ແທ້ໆ, ອະໄວຍະວະເພດຂອງເພດຊາຍຈະຫຼັ່ງນ້ຳອະສຸຈິອອກມາ(ແລະ ສິ່ງທີ່ເຄື່ອນທີ່ໄປນຳນ້ຳອະສຸຈິຂອງລາວນັ້ນແມ່ນຈຸລັງເຊື້ອອະສຸຈິ). ຈາກນັ້ນ ຈຸລັງເຊື້ອອະສຸຈິຈະມີການແຂ່ງຂັນກັນເຂົ້າໄປຫາຈຸລັງໄຂ່ຂອງເພດຍິງ. ຈຸລັງເຊື້ອອະສຸຈິລອຍເຂົ້າໄປໃນມົດລູກຈົນເຂົ້າໄປເຖິງຈຸລັງໄຂ່ທີ່ຢູ່ໃນທໍ່ສົ່ງໄຂ່. ຖ້າຫາກວ່າ ຈຸລັງເຊື້ອອະສຸຈິຕົວໃດແຂງແຮງ ແລະ ສາມາດເຂົ້າໄປເຖິງກ່ອນມັນກໍ່ຈະ "ເກີດການປະຕິສົນທິ 'ປະສົມພັນ'" ກັບຈຸລັງໄຂ່ ຈາກນັ້ນ ກໍ່ຈະໄດ້ກໍ່ຕົວເປັນເດັກນ້ອຍ. ຈາກນັ້ນ ເມື່ອຈຸລັງໄຂ່ ແລະ ຈຸລັງເຊື້ອອະສຸຈິມີການປະຕິສົນທິ(ປະສົມພັນ)ແລ້ວ ພວກມັນກໍຈະມີການເຄື່ອນຍ້າຍຈຸລັງໄຂ່ ແລະ ຈຸລັງເຊື້ອອະສຸຈິເຂົ້າໄປໃນມົດລູກ ແລະ ໄປຕິດຢູ່ກັບຝາຜະໜັງມົດລູກ. ສິ່ງດັ່ງກ່າວເປັນວິທີທີ່ແມ່ຍິງມີການຕັ້ງຄັນ(ຖືພາ).

**18.****ເວົ້າວ່າ** 'ດັ່ງທີ່ພວກເຮົາເຫັນ, ມັນຕ້ອງໃຊ້ຄົນສອງຄົນ(ເພດຊາຍ ແລະ ເພດຍິງ) ໃນການເຮັດໃຫ້ມີເດັກ ເພາະສະນັ້ນ ການມີເພດສຳພັນຄວນຈະເປັນຄວາມຮັບຜິດຊອບລະຫວ່າງຄົນສອງຄົນ'.

**19.****ພາກສະຫຼຸບ**: ທວນຄືນອີກຄັ້ງ. ສະເໜີເອົາອາສາສະໝັກຂຶ້ນມາຢືນຢູ່ຕໍ່ໜ້າຫ້ອງ. ຕັ້ງຖາມຄຳກັບນັກຮຽນໃນຫ້ອງດ້ວຍຄຳຖາມທີ່ໄດ້ຈາກກ່ອງທີ່ຂຽນໄວ້ຂ້າງລຸ່ມນີ້ ແລະ ອາສາສະໝັກຕ້ອງໄດ້ຕອບຄຳຖາມຂອງພວກເຂົາດ້ວຍການສະແດງຮູບພາບ.

**ຄຳຖາມທີ່ສຳຄັນເພື່ອທວນຄືນບົດຮຽນ**

- ເດັກຍິງມີຫຍັງແດ່ຢູ່ໃນອະໄວຍະວະເພດຂອງເຂົາເຈົ້າ? ພວກເຂົາປ່ອຍຫຍັງອອກມາໃນແຕ່ລະເດືອນ?
- ຖ້າຈຸລັງໄຂ່ບໍ່ໄດ້ຮັບການປະຕິສົນທິ(ປະສົມພັນ) ແມ່ນຫຍັງຈະເກີດຂຶ້ນ?
- ການປະຕິສົນທິ(ປະສົມພັນ)ເກີດຂຶ້ນດ້ວຍວິທີໃດ? ເດັກຊາຍມີຫຍັງແດ່ຢູ່ໃນອະໄວຍະວະເພດຂອງພວກເຂົາ?
- ຈົ່ງອະທິບາຍແມ່ນຫຍັງຈະເກີດຂຶ້ນໃນເວລາມີເພດສຳພັນລະຫວ່າງເພດຍິງ ແລະ ເພດຊາຍ.

## ກິດຈະກຳ 2.1 ອະນາໄມຮ່າງກາຍເມື່ອເປັນປະຈຳເດືອນ

**ຄຳແນະນຳສຳລັບຜູ້ນຳພາກິດຈະກຳເພື່ອນສອນເພື່ອນ:**

**ພາກການແນະນຳສຳລັບກິດຈະກຳ:** ໃນກິດຈະກຳນີ້ ຈະໄດ້ຊ່ວຍແນະນຳສະມາຊິກພາຍໃນກຸ່ມຂອງເຂົ້າຮຽນຮູ້ກ່ຽວກັບສຸຂະອະນາໄມການເປັນປະຈຳເດືອນ ແລະ ວິທີການນຳໃຊ້ຜ້າອະນາໄມ(ໂກເຕັກ)ທີ່ເໝາະສົມ.

**ຈຸດປະສົງ:** ເພື່ອຮຽນຮູ້ກ່ຽວກັບການອະນາໄມຮ່າງກາຍເມື່ອເປັນປະຈຳເດືອນ ແລະ ວິທີການໃຊ້ຜ້າອະນາໄມທີ່ຖືກຕ້ອງ

**ເວລາ:** 20 ນາທີ

**ການກະກຽມອຸປະກອນ:** ຜ້າອະນາໄມ(ໂກເຕັກ) (ຢ່າງໜ້ອຍ 5 ອັນ) ແລະ ຊຸດຊັ້ນໃນ(ສະລິບ)ຢ່າງໜ້ອຍ 5 ຜືນ

### ເລີ່ມກິດຈະກຳ

1. **ພາກຄຳແນະນຳສຳລັບກິດຈະກຳ. ເວົ້າ:** ຮອດນີ້, ພວກເຮົາຈະມາເວົ້າເພີ່ມເຕີມກ່ຽວການເປັນປະຈຳເດືອນ. ປະຈຳເດືອນຂອງເຈົ້າຈະມາອີກເມື່ອໃດ? ຖ້າເບິ່ງຖ້າມີຄົນຕອບບໍ່.
2. **ອ່ານໂດຍໃຊ້ສຽງດັງ:** ເມື່ອໄຂ່ສຸກບໍ່ໄດ້ຮັບການປະຕິສົນທິ(ປະສົມພັນ). ໂດຍປົກກະຕິແລ້ວ, ເຈົ້າຈະມີປະຈຳເດືອນທຸກໆເດືອນ (ຫຼັງຈາກ 28 ວັນ), ແຕ່ບໍ່ຕ້ອງຢ້ານຖ້າມັນມາກ່ອນ ຫຼື ຫຼັງ. ຜູ້ຍິງບາງຄົນມີປະຈຳເດືອນບໍ່ປົກກະຕິ ແລະ ບາງຄັ້ງມັນອາດຈະມາຊ້າໜຶ່ງ-ສອງອາທິດ. ນີ້ມັນອາດເປັນເພາະອາຫານການກິນ ຫຼື ການເຮັດກິດຈະກຳຕ່າງໆຂອງເຈົ້າ. ມັນເປັນເລື່ອງປົກກະຕິທີ່ເຈົ້າຄວນຢ້ານຖ້າເຈົ້າມີເພດສຳພັນໂດຍທີ່ບໍ່ໄດ້ປ້ອງກັນ, ເຈົ້າຈະມີໂອກາດທີ່ຈະຖືພາໄດ້.
3. **ເວົ້າ:** ສະນັ້ນ, ດຽວນີ້ ພວກເຮົາຈະມາຮຽນຮູ້ວິທີການໃຊ້ຜ້າອະນາໄມ(ໂກເຕັກ). ມີໃຜຢູ່ນີ້ຮູ້ວິທີໃຊ້ຜ້າອະນາໄມບໍ່? ຖ້າເບິ່ງວ່າມີຄົນຕອບບໍ່. ຖ້າມີຄົນຍົກມືຂຶ້ນ, ໃຫ້ເຂົາເຈົ້າອາສາສະໝັກຂຶ້ນມາໜ້າກະດານ.
4. **ການສາທິດ: ວິທີການໃຊ້ຜ້າອະນາໄມ(ໂກເຕັກ)**

1. ລ້າງມືໃສ່ສະບູພ້ອມເຊັດໃຫ້ແຫ້ງ



2. ນຳເອົາຜ້າອະນາໄມອອກຈາກຊອງ



3.ລອກເຈ້ຍທີ່ປົກປິດທາງຫຼັງຜ້າ
ອະນາໄມ(ໂກເຕັກ)ທີ່ມີຢາງ
ໜຽວອອກ




4.ວາງແຜ່ນຜ້າອະນາໄມທາງໜຽວລົງ
ເພື່ອໃຫ້ຕິດຢູ່ກັບພື້ນສະລິບຂອງເຈົ້າ. ແຕ່
ໃຫ້ແນ່ໃຈວ່າເຮົາບໍ່ເຂີນທາງໜ້າ ຫຼື ຫຼັງ
ເກີນໄປ.




5. ດຶງຜ້າອະນາໄມອອກຈາກຊຸດຊັ້ນໃນ (ສະ
ລິບ), ແລ້ວມ້ວນຂຶ້ນ ແລະ ຫໍ່ດ້ອຍແຜນ
ຢ່າງທີ່ເຈົ້າແກະຈາກຜ້າອະນາໄມໂຕທີ່ຈະ
ໃຊ້ໃໝ່




6. ເຈົ້າສາມາດຫໍ່ດ້ອຍເຈ້ຍທິສຊູກໍ່ໄດ້,
ຈາກນັ້ນຖິ້ມລົງໃສ່ກະຖັງຂີ້ເຫຍື້ອ,
ຢ່າຖິ້ມລົງໃນຊັກໂຄກເດັດຂາດ



8. ປ່ຽນຜ້າອະນາໄມໃນທຸກໆ 4-5 ຊົ່ວໂມງ



7. ລ້າງມື



**ການສາທິດຄຳແນະນຳ**

ເວົ້າ: ກ່ອນອື່ນໝົດເຈົ້າຄວນລ້າງມືໃສ່ສະບູ ແລະ ລ້າງອອກດ້ວຍນ້ຳສະອາດພ້ອມເຊັດໃຫ້ແຫ້ງ. ຫຼັງຈາກນັ້ນ ເອົາຜ້າອະນາໄມອອກມາ (ສາທິດໃຫ້ຄືນໃນຫ້ອງເບິ່ງ) ແລະ ມຸນໄປທາງທີ່ຖືກຕ້ອງ(ບອກພວກເຂົາວິທີຈຳແນກທາງທີ່ຖືກຕ້ອງຈາກທາງທີ່ຜິດ). ຈາກນັ້ນ, ເອົາຢາງທໍທາງຫຼັງອອກມາ ແລະ ຕິດຜ້າອະນາໄມໃສ່ບ່ອນແຜງເປົ້າຂອງຊຸດຊັ້ນໃນ(ສະລິບ). ກວດເບິ່ງວ່າມັນພໍດີລະບໍ່ລະຫວ່າງດ້ານໜ້າ ແລະ ຫຼັງ. ຫຼັງຈາກນັ້ນ, ເອົາຢາງຈາກປີກຜ້າອະນາໄມອອກແລ້ວພັບປີກຜ້າອະນາໄມລົງດ້ານລຸ່ມຂອງຊຸດຊັ້ນໃນເພື່ອໃຫ້ມັນບໍ່ຕົກ(ເຮັດແບບນີ້), ຕອນນີ້ເຈົ້າສາມາດໃຊ້ມັນໄດ້.

**ສະຫຼຸບເນື້ອໃນສຳຄັນຂອງບົດຮຽນໂດຍຫຍໍ້**

**ອ່ານໃຫ້ດັງ:**

- ເຈົ້າຄວນປ່ຽນຜ້າອະນາໄມຢ່າງໜ້ອຍໃນທຸກໆ 4-5 ຊົ່ວໂມງ.
- ເຈົ້າສາມາດປ່ຽນມັນເລື້ອຍໆຕາມຄວາມຕ້ອງການ ຖ້າເຫັນວ່າເຈົ້າມີເລືອດລົງຫຼາຍ.
- ທາງທີ່ດີທີ່ສຸດແມ່ນດຶງມັນອອກຈາກຊຸດຊັ້ນໃນ(ສະລິບ), ແລ້ວມ້ວນຂຶ້ນ ແລະ ຫໍ່ດ້ວຍແຜນຢາງທີ່ເຈົ້າແກະຈາກຜ້າອະນາໄມໂຕທີ່ຈະໃຊ້ໃໝ່(ສາທິດສິ່ງດັ່ງກ່າວ).
- ຖ້າສາມາດຫຸ້ມຫໍ່ມັນດ້ວຍເຈ້ຍທິດຊູຖ້າເຈົ້າຕ້ອງການ ຈາກນັ້ນ ຈຶ່ງນຳໄປຖິ້ມໃສ່ຖັງຂີ້ເຫຍື້ອ.
- ຫ້າມບໍ່ໃຫ້ຖິ້ມສິ່ງດັ່ງກ່າວລົງໃນຊັກໂຄກ.

ຖ້າເປັນໄປໄດ້ໃຫ້ຢາຍຜ້າອະນາໄມ ແລະ ສະລິບ

**ການສາທິດຢູ່ພາຍໃນກຸ່ມ**:ຂ້ອຍຕ້ອງການໃຫ້ເຈົ້ານຳເອົາຜ້າອະນາໄມວາງໃສ່ເທິງສະລິບ. ບໍ່ຕ້ອງຟ້າວ, ມັນບໍ່ແມ່ນການແຂ່ງຂັນ. ເຈົ້າຄວນຈະເຮັດດ້ວຍຄວາມລະມັດລະວັງ ດັ່ງນັ້ນ ມັນຈະຢູ່ຢ່າງເໝາະສົມ. ເມື່ອເຈົ້າເຮັດຮຽບຮ້ອຍແລ້ວ ຈຶ່ງບອກໃຫ້ຂ້ອຍຮູ້.

## ກິດຈະກຳ 3.1 ວິທີປ້ອງກັນການຕັ້ງຄັນ) ການມີເພດສຳພັນທີ່ປອດໄພ

**ຄຳແນະນຳສຳລັບຜູ້ນຳພາກິດຈະກຳເພື່ອນສອນເພື່ອນ**

**ພາກຂໍ້ມູນຂ່າວສານສຳລັບກິດຈະກຳ:** ໃນກິດຈະກຳນີ້ ເຈົ້າຈະໄດ້ຊ່ວຍແນະນຳສະມາຊິກພາຍໃນກຸ່ມຂອງເຈົ້າຮຽນຮູ້ກ່ຽວກັບສິ່ງທີ່ເປັນຜົນສະທ້ອນຂອງການຕັ້ງຄັນໃນຈຳນວນເດັກຍິງ ແລະ ເດັກຊາຍ.

**ຈຸດປະສົງ:** ມາຮຽນກ່ຽວກັບການມີເພດສຳພັນທີ່ປອດໄພ (ວິທີການຄຸມກຳເນີດ, ຄວາມສຳຄັນຂອງການມີລູກໃນໄວອັນຄວນ, ຄວາມສຳຄັນຂອງການເວົ້າເຖິງເລື່ອງກ່ຽວກັບບັນຫາ)

**ເວລາ:** 20 ນາທີ (ລວມທັງເວລາພັກຜ່ອນ)

**ການກະກຽມອຸປະກອນ:** ວິດີໂອຄຳແນະນຳການຄຸມກຳເນີດ(2:07), https://youtu.be/5t6Wt4oxUL8

ຮູບພາບຄອບຄົວໃຫຍ່ ແລະ ຄອບຄົວນ້ອຍ, ສະຕິກເກີຖົງຢາງອະນາໄມ ແລະ ອະໄວຍະວະເພດຊາຍ

## ເລີ່ມກິດຈະກຳ

1. **ພາກຄຳແນະນຳກ່ຽວກັບບົດຮຽນ.** **ອ່ານໃຫ້ດັງ**: ດຽວນີ້ ເຈົ້າເຂົ້າໃຈກ່ຽວກັບວິທີການຂອງການກໍ່ຕົວເປັນເດັກແລ້ວ, ຕໍ່ໄປນີ້ພວກເຈົ້າຈະໄດ້ຮຽນຮູ້ກ່ຽວກັບຄວາມສຳຄັນຂອງການຫຼີກລ່ຽງການຕັ້ງຄັນ(ການຖືພາ).
2. **ຖາມ** ເມື່ອໃດແມ່ຍິງຈຶ່ງຄວນຈະເລີ່ມຕົ້ນຖືພາ? (ລໍຖ້າຄຳຕອບວ່າຈະມີໃຜຕອບບໍ່)
3. **ອ່ານໃຫ້ດັງ:**

- ແມ່ ແລະ ເດັກຈະແຂງແຮງທີ່ສຸດ ເມື່ອຜູ້ເປັນແມ່ມີອາຍຸເຖິງ 20 ປີ ຮ່າງກາຍຂອງເດັກຍິງ ແລະ ເດັກຊາຍໄດ້ຮັບການພັດທະນາຢ່າງເຕັມທີ່ກ່ອນການຖືພາ.
- ຖ້າພວກເຈົ້າຍັງນ້ອຍຫຼາຍການຖືພາມັນອາດຈະເປັນອັນຕະລາຍໄດ້
- ເດັກຍິງທີ່ຖືພາໄວອາດຈະມີຄວາມຮູ້ສຶກວ່າມີຄວາມເຈັບປວດຮ້າຍແຮງ ຫຼື ບໍ່ ກໍອາດຈະເຖິງຂັ້ນເສຍຊີວິດໄດ້ ເພາະວ່າ ຮ່າງກາຍຂອງເຈົ້າກຳລັງຈະເລີນເຕີບໂຕ ແລະ ກຳລັງພັດທະນາ. ເຈົ້າອາດຈະຍັງບໍ່ທັນພ້ອມທີ່ຈະໃຊ້ກຳລັງແຮງທາງຮ່າງກາຍ ແລະ ທາງຈິດໃຈ.
- ເດັກຖືພາໄວອາດຈະພາດໂອກາດຫຼາຍໆຢ່າງໃນຊີວິດເຊິ່ງເປັນຜົນກະທົບຕໍ່ການຮຽນຮູ້ ແລະ ການຫາລ້ຽງຊີບໃນຊ່ວງປະຈຸບັນເຖິງອະນາຄົດຂອງເຂົາເຈົ້າ.
- ຖ້າຫາກເຈົ້າມີລູກມັນສາມາດເປັນອັນຕະລາຍຕໍ່ເຈົ້າ ແລະ ລູກຂອງເຈົ້າ. ເຈົ້າອາດຈະໄດ້ອອກໂຮງຮຽນ ເພາະເຈົ້າຈະຕ້ອງໄດ້ດູແລລູກຂອງເຈົ້າແທນ.
- ເດັກເກີດໃນລູກຫົວສາວອາດຈະເກີດໄວກວ່າປົກກະຕິ, ຕົ້ນຕົວນ້ອຍ, ຫຼື ມີອາການປ່ວຍຫຼາຍ. ມັນມີຄວາມສ່ຽງຫຼາຍຕໍ່ກັບເດັກທີ່ເກີດກ່ອນໄວອັນຄວນ ຫຼື ຕົ້ນຕົວນ້ອຍ. ເຖິງແມ່ນວ່າ ເດັກຈະລອດຊີວິດແຕ່ພວກເຂົາກໍຈະປະເຊີນກັບບັນຫາສຸຂະພາບດ້ວຍການເຈັບປ່ວຍຢູ່ເລື້ອຍໆໃນອະນາຄົດ.

4. **ເວົ້າ**ເປັນປະຈຳ, ພໍ່ແມ່ທີ່ຍັງນ້ອຍ/ ພໍ່ແມ່ທີ່ມີອາຍຸນ້ອຍມີລູກຫຼາຍຄົນ. ສະແດງຮູບພາບຄອບຄົວທີ່ໃຫຍ່ ແລະ ຄອບຄົວນ້ອຍ. ໃຫ້ສົນທະນາຄວາມໄດ້ປຽບ ແລະ ເສຍປຽບຂອງຄອບຄົວໃຫຍ່.



5. **ອ່ານໃຫ້ດັງ:** ເມື່ອໃດແກ່ຂຶ້ນ ຄົນເຮົາສາມາເລືອກວິທີການຄຸມກຳເນີດເພື່ອປ້ອງກັນການຖືພາໂດຍບໍ່ໄດ້ຕັ້ງໃຈ. ເລືອກວິທີການລວມທັງການໃຊ້ຖົງຢາງອະນາໄມ, ການສັກຢາຄຸມ, ກິນຢາຄຸມ ແລະ ວິທີການອື່ນໆ. ດຽວນີ້ ວິດີໂອຈະສະແດງໃຫ້ເຈົ້າເຫັນວິທີການແນະນຳວິທີການຄຸມກຳເນີດ.
6. **ເປີດວິດີໂອ** ການແນະນຳວິທີການຄຸມກຳເນີດ (2:07), **(ທາງເລືອກ)** https://youtu.be/5t6Wt4oxUL8
7. **ຢາຍ**ປຶ້ມນ້ອຍໃຫ້ນັກຮຽນ ແລ້ວແນະນຳໃຫ້ເຂົາເຈົ້າເປີດປຶ້ມ ໜ້າທີ່ 11.

**8.** ດັ່ງທີ່ເຈົ້າໄດ້ເຫັນຢູ່ໃນໜ້າທີ່ 11, ເຊິ່ງມັນມີຫຼາຍວິທີໃນການຄຸມກໍາເນີດທີ່ແຕກຕ່າງກັນ. ວິທີ 'ທີ່ງ່າຍທີ່ສຸດ' (ວິທີທີ່ຍອມຮັບໄດ້ຫຼາຍທີ່ສຸດ, ວິທີທີ່ສະດວກທີ່ສຸດ) ແລະ ວິທີທີ່ຮູ້ຈັກກັນຫຼາຍທີ່ສຸດໃນສັງຄົມຢ່າງກວ້າງຂວາງແມ່ນວິທີການໃຊ້ຖົງຢາງອະນາໄມ.

ກະລຸນາເປີດປຶ້ມ ໜ້າທີ່ 12

**ຖົງຢາງອະນາໄມ** ແມ່ນຄ້າຍຄືຖົງເທົ້າ(ຖົງຕີນ)ສໍາລັບສຸບໃສ່ອະໄວຍະວະເພດຊາຍກ່ອນເພດຊາຍ ແລະ ເພດຍິງຈະມີເພດສໍາພັນ; ເພດຊາຍຈະສວມຖົງຢາງອະນາໄມໃສ່ໃນອະໄວຍະວະເພດ(ໂຄຍ)ຂອງຕົນເອງ ດັ່ງນັ້ນ ນໍ້າອະສຸຈິຈຶ່ງຈະບໍ່ສາມາດໄຫຼເຂົ້າໄປໃນຮ່າງກາຍຂອງເພດຍິງໄດ້. ເມື່ອນໍ້າອະສຸຈິບໍ່ສາມາດໄຫຼເຂົ້າໄປໃນຮ່າງການຂອງເພດຍິງ ມັນກໍຈະບໍ່ສາມາດເກີດການການປະຕິສົນທິ(ປະສົມພັນ)ກັບໄຂ່ຂອງເພດຍິງ ແລະ ດັ່ງນັ້ນ ຜູ້ຍິງຈຶ່ງບໍ່ສາມາດຖືພາໄດ້. ຖົງຢາງອະນາໄມຍັງເປັນສິ່ງທີ່ດີຫຼາຍມັນຍັງສາມາດປ້ອງກັບພະຍາດຕິດຕໍ່ທາງເພດສໍາພັນເຊັ່ນ ເຊື້ອເອດສ **HIV** ແລະ ພະຍາດຕິດຕໍ່ທາງເພດສໍາພັນອື່ນໆ STDs. ພວກເຮົາຈະອະທິບາຍເລື່ອງ ເອດສ໌ໄອວີ **HIV** ໃນກິດຈະກໍາຕໍ່ໄປ




**9. ພາກສະຫຼຸບ:**

| <u>**ເນື້ອໃນສໍາຄັນເພື່ອທວນຄືນບົດຮຽນໂດຍຫຍໍ້**</u> |
| --- |
| • ການຖືພາກ່ອນໄວອັນຄວນຈະເປັນອັນຕະລາຍຕໍ່ໄວໜຸ່ມ(ແມ່) ແລະ ລູກ. |
| • ມີຫຼາຍວິທີການຄຸມກໍາເນີດ, ດັ່ງນັ້ນ ເປັນໄປໄດ້ບໍ່ທີ່ຈະມີການຮ່ວມເພດສໍາພັນໂດຍບໍ່ໃຫ້ມີການຖືພາ. |
| • ຖົງຢ່າງອະນາໄມບໍ່ເປັນພຽງແຕ່ວິທີການຄຸມກໍາເນີດ ມັນຍັງສາມາດປ້ອງກັນ ເຊື້ອເອດສ໌ໄດ້ HIV. |
| • ຖ້າທ່ານມີຂໍ້ສົງໄສໃຫ້ໄປພົບແພດ ຫຼື ຜູ້ຊ່ຽວຊານມືອາຊີບເພື່ອໃຫ້ຄໍາປຶກສາ. |
| • ມັນເປັນສິ່ງສໍາຄັນທີ່ບໍ່ອາຍເວົ້າເລື່ອງນີ້. |

**10. ບັນທຶກ:** ໃນຫຼັງປຶ້ມນ້ອຍຫົວນີ້(ທ່ານສາມາດນໍາເອົາກັບໄປບ້ານໄດ້) ມັນມີ ເວບໄຊ້ ການເຊື່ອມໂຍງ ທ່ານສາມາດເຂົ້າເບິ່ງຂໍ້ມູນຂ່າວສານເພີ່ມເຕີມໄດ້ອີກກ່ຽວກັບສຸຂະພາບຈະເລີນພັນ. ຖ້າຫາກທ່ານຄົ້ນຫາຢູ່ໃນ ຢູທູບ *YouTube link* https://youtu.be/5t6Wt4oxUL8, ທ່ານຈະເຫັນວິດີໂອອະທິບາຍວິທີການຄຸມກໍາເນີດໃນຫຼາຍວິທີທີ່ແຕກຕ່າງກັນ. ສະແດງປຶ້ມໜ້າສຸດທ້າຍໃຫ້ພວກເຂົາເບິ່ງ. ດັ່ງນັ້ນຖ້າທ່ານຢາກສຶກສາຕື່ມອີກທ່ານສາມາດເບິ່ງວີດີເຫຼົ່ານັ້ນໄດ້.

## ກິດຈະກໍາ 4.1 ພະຍາດຕິດຕໍ່ທາງເພດສໍາພັນ STIs ແລະ ເອດສ໌ໄອວີ 'ເຊື້ອເອດສ໌' HIVs

**ຄໍາແນະນໍາສໍາລັບຜູ້ນໍາພາກິດຈະກໍາເພື່ອນສອນເພື່ອນ:**

**ພາກຄໍາແນະນໍາສໍາລັບກິດຈະກໍາ:** ໃນກິດຈະກໍານີ້ ເຈົ້າຈະໄດ້ຊ່ວຍແນະນໍາສະມາຊິກພາຍໃນກຸ່ມຂອງເຈົ້າເພື່ອຮຽນຮູ້ກ່ຽວກັບວິທີປ້ອງກັນ ແລະ ຊອກຫາແຫຼ່ງປິ່ນປົວພະຍາດຕິດຕໍ່ທາງເພດສໍາພັນ, ລວມທັງ ເຊື້ອ ເອດສ໌ HIV

**ຈຸດປະສົງ**: ແມ່ນຮຽນຮູ້ກ່ຽວກັບການມີເພດສຳພັນທີ່ປອດໄພ (ວິທີການຄຸມກຳເນີດ, ຄວາມສຳຄັນຂອງການເກີດລູກໃນໄວອັນຄວນ, ຄວາມສຳຄັນຂອງການເວົ້າເລື່ອງກ່ຽວກັບບັນຫາ)

**ເວລາ:** 20 ນາທີ

**ການກະກຽມອຸປະກອນ**: ຫົກຄຳແຈ້ງທີ່ພິມອອກສຳລັບ ເກມ **ຖືກ ຫຼື ຜິດ**

## ເລີ່ມກິດຈະກຳ

1. **ພາກຄຳແນະນຳສຳລັບກິດຈະກຳ.** **ອ່ານໂດຍໃຊ້ສຽງດັງ**: ດຽວນີ້ ພວກເຮົາຈະມາໂອ້ລົມກັນກ່ຽວກັບພະຍາດຕິດຕໍ່ທາງເພດສຳພັນ, ຊະນິດໜຶ່ງກໍ່ແມ່ນ ເຊື້ອເອດສ໌ໄອວີ HIV . ກັບພະຍາດຕິດຕໍ່ທາງເພດສຳພັນແມ່ນຄວາມເຈັບປ່ວຍທີ່ໄດ້ຈາກຄົນໜຶ່ງໄປສູ່ອີກຄົນໜຶ່ງໃນຊ່ວງເວລາມີເພດສຳພັນ.
2. **ຖາມ**ມີໃຜຮູ້ບໍວ່າ ເຊື້ອເອສ໌ໄອວີ HIV ແລະ ເອດສ໌ AIDS ແມ່ນຫຍັງ? ມີໃຜຮູ້ບໍ່ວ່າມັນມີການຕິດຕໍ່ກັນໄດ້ແນວໃດ?
3. **ອະທິບາຍ/ ອ່ານໂດຍໃຊ້ສຽງດັງ**

**ເອດສ໌ໄອວີ (HIV)** ແມ່ນໄວຣັດທີ່ຄ່ອຍໆໂຈມຕີລະບົບພູມຄຸ້ມກັນຂອງມະນຸດ.

**HIV** ເອດສ໌ໄອວີ ແມ່ນໄວຣັດທີ່ເກີດຈາກການມີສ່ວນຮ່ວມທາງທາດແຫຼວຂອງຮ່າງກາຍກັບຄົນຜູ້ທີ່ມີເຊື້ອ ເອດສ໌ໄອວີ **HIV** ເຊັ່ນວ່າ: ເລືອດ, ທາດແຫຼວກ່ອນເກີດ, ນ້ຳອະສຸຈິ, ນ້ຳເມືອກໃນຊ່ອງຄອດ ແລະ ນ້ຳນົມ. ມັນບໍ່ສາມາດຕິດຕໍ່ໄດ້ຜ່ານທາງນ້ຳລາຍ ຫຼື ການຈັບບາຍກັບຄົນຜູ້ທີ່ມີເຊື້ອເອດສ໌ໄດ້, ດັ່ງນັ້ນ ທ່ານຈຶ່ງບໍ່ຕິດເຊື້ອ ເອດສ໌ **HIV** ຈາກທາງການຈູບ, ການກິນອາຫານຮ່ວມກັນ ຫຼື ການຈັບມືກັບຜູ້ທີ່ມີເຊື້ອ ເອດສ໌ໄອວີ **HIV** ... ແຕ່ທ່ານສາມາດຕິດເຊື້ອໄດ້ຈາກການມີເພດສຳພັນທີ່ບໍ່ປ້ອງກັນ.

**Acquired Immune Deficiency Syndrome (AIDS)** ເອດສ໌ ແມ່ນສະພາບທາງການແພດທີ່ເກີດຈາກເຊື້ອ ເອດສ໌ໄອວີ **HIV**.

ຄົນທີ່ໄດ້ບົ່ງມະຕິວ່າມີເຊື້ອ ເອດສ໌ AIDS ເມື່ອພູມຄຸ້ມກັນຂອງພວກເຂົາຕ່ຳ

4. ດັ່ງຕໍ່ໄປນີ້ຈະແມ່ນ **ເກມ ຖືກ ຫຼື ຜິດ**: ພວກເຮົາມີເຈ້ຍຄຳຕອບຈຳນວນ 6 ໃບ ແລະ ໃຫ້ອ່ານໄປເທື່ອລະໃບ. ຈາກນັ້ນ ໃຫ້ທ່ານຕອບຄຳຕອບທີ່ຢູ່ໃນເຈ້ຍຄຳຕອບດັ່ງກ່າວໂດຍໃຊ້ຄຳວ່າ ຖືກ ຫຼື ຜິດ:
5. ພາຍຫຼັງທີ່ຂ້ອຍໄດ້ອ່ານເຈ້ຍຄຳຕອບ ຖ້າເຈົ້າເຫັນວ່າເຈ້ຍຄຳຕອບ "**ຖືກຕ້ອງ**" ເຈົ້າຕ້ອງລຸກຂຶ້ນ, ຖ້າວ່າເຫັນວ່າເຈ້ຍຄຳຕອບນັ້ນ "**ຜິດ**" ເຈົ້າຕ້ອງ **ຍົກມືຂຶ້ນ** ແລະ ຖ້າເຈົ້າ "**ບໍ່ຮູ້**" ໃຫ້**ນັ້ງຢູ່ເສີຍໆ**, ນັ່ງຢູ່ເສີຍໆ.

ວິດີໂອຈາກ **PSI:**

6. **ອ່ານເຈ້ຍຄຳຕອບທຳອິດ**: ແນະນຳໃຫ້ໜຶ່ງ ຫຼື ສອງຄົນອະທິບາຍຄຳຕອບຂອງພວກເຂົາ. ອະນຸຍາດໃຫ້ນັກຮຽນຜູ້ອື່ນໆສະເໜີຄຳຕອບທີ່ມັນຖືກ ຫຼື ຄຳຕອບທີ່ຖືກຕ້ອງຕາມທີ່ຕ້ອງການ.

**ກ. ເຈົ້າສາມາດສັງເກດເບິ່ງຄົນຜູ້ນັ້ນດ້ວຍສາຍຕາ ຖ້າເຂົາມີເຊື້ອ ເອດສ໌ HIV.**

**ຄຳຕອບແມ່ນ-ຜິດ.** ເຈົ້າບໍ່ສາມາດສັງເກດໄດ້ດ້ວຍຕາເປົ່າຖ້າວ່າ ຖ້າວ່າຄົນເຮົາມີເຊື້ອເອດສ໌

ສືບຕໍ່ໃນວິທີດຽວກັນນີ້ສຳລັບຄຳຕອບອື່ນໆ:

**ຂ) ເອດສ໌ ບໍ່ສາມາດຕິດຕໍ່ໄດ້ດ້ວຍການນຳເຊື້ອດ້ວຍຍຸງ**

| |
|---|
| **ຄຳຕອບແມ່ນ: ຖືກ.** ຍຸງບໍ່ສາມາດນຳເຊື້ອ ເອດສ໌ ໄດ້. ເຊື້ອ ເອດສ໌ ແມ່ນພົບເຫັນໃນເລືອດຂອງມະນຸດ. ແຕ່ມັນບໍ່ສາມາດແຜ່ເຊື້ອຢູ່ນຳຍຸງ. ເຖິງຢ່າງໃດກໍຕາມ ພະຍາດໄຂ້ເລືອດອອກສາມາດນຳເຊື້ອໄດ້ດ້ວຍຍຸງ. |

**ຄ) ເຊື້ອ ເອດສ໌ ສາມາດນຳເຊື້ອໄດ້ໂດຍການມີເພດສຳພັນທີ່ບໍ່ໃຊ້ຖົງຢາງອະນາໄມ.**

| |
|---|
| **ຄຳຕອບແມ່ນ: ຖືກ.** ໃນເລື່ອງຂອງການມີເພດສຳພັນຖ້າບໍ່ສວມຖົງຢາງອະນາໄມ, ເອດສ໌ ສາມາດແຜ່ກະຈາຍຈາກຜູ້ຕິດເຊື້ອຄົນໜຶ່ງໄປສູ່ອີກຄົນໜຶ່ງ. ຖົງຢາງອະນາໄມເປັນວິທີທີ່ປ້ອງກັນເຊື້ອ ເອດສ໌ ຖ້າໃນເວລາມີເພດສຳພັນ. |

**ງ) ທາງທີ່ດີທີ່ສຸດໃນການປ້ອງກັນພະຍາດຕິດຕໍ່ລວມທັງ ເອດສ໌ ແມ່ນຫຼີກລ້ຽງການມີເພດສຳພັນ ຫຼື ໃຊ້ຖົງຢາງອະນາໄມໃນເວລາມີເພດສຳພັນກັບຄົນແປກໜ້າ ຫຼື ມີຄູ່ນອນຄົນດຽວຫຼັງຈາກນັ້ນຈະໄປກວດເລືອດຮ່ວມກັນ.**

| |
|---|
| **ຄຳຕອບແມ່ນ: ຖືກ**-- ທາງທີ່ດີທີ່ສຸດໃນການປ້ອງກັນ ເຊື້ອ ເອດສ໌ ຖ້າຫາກຈະມີເພດສຳພັນກັບໃຜຜູ້ໜຶ່ງແມ່ນໃຫ້ໃຊ້ຖົງຢາງອະນາໄມທຸກໆຄັ້ງ ແລະ ການມີຄູ່ນອນຄົນດຽວກໍເປັນວິທີປ້ອງກັນເຊື້ອ ເອດສ໌ |

**ຈ) ຖົງຢາງອະນາໄມສາມາດໃຊ້ໄດ້ໃນຄັ້ງດຽວ**

| |
|---|
| **ຄຳຕອບແມ່ນ: ຖືກ--**ຖົງຢາງອະນາໄມຖົງໜຶ່ງໃຊ້ໄດ້ພຽງຄັ້ງດຽວ. |

**ສ) ເຊື້ອເອດສ໌ ສາມາດຕິດຕໍ່ໄດ້ດ້ວຍການກິນອາຫານຮ່ວມກັນ**

| |
|---|
| **ຄຳຕອບແມ່ນ: ຜິດ--**ເຊື້ອ ເອດສ໌ ຄົ້ນພົບຢູ່ພາຍໃນເລືອດ. ມັນຍັງພົບເຫັນຢູ່ໃນທາດແຫຼວໃນຮ່າງກາຍຂອງມະນຸດ , ຢູ່ໃນຈຸດລັບຂອງຜູ້ຊາຍ ແລະ ຜູ້ຍິງ ແລະ ຢູ່ໃນນ້ຳນົມ. ມັນບໍ່ສາມາດແຜ່ເຊື້ອໄດ້ໃນທາງການກິນອາຫານຮ່ວມກັນ. |

**ຊ) ຄົນທີ່ມີເຊື້ອ ເອດສ໌ ສາມາດຢູ່ໄດ້ດົນນານ ແລະ ມີຊີວິດທີ່ຈະເລີນພັນ**

| |
|---|
| **ຄຳຕອບແມ່ນ: ຖືກ**--ຢາປົວທີ່ມີຊື່ວ່າ ແອນຕີ-ເຣດໂຕຣໄວໂຣ ຫຼື ເອອາຣວີ(anti-retroviral or ARV? ເຮັດໃຫ້ຄົນເຮົາທີ່ມີເຊື້ອເອດສູມີຊີວິດຢູ່ໄດ້ດົນ ແລະ ມີຊີວິດທີ່ຈະເລີນພັນ. ຢາປົວຊະນິດນີ້ຮັກສາຊີວິດໃຫ້ຍືນຍາວ. ຊຸກຍູ້ໃຫ້ບຸກຄົນທີ່ມີເຊື້ອ ເອດສ໌ ກິນຢາດັ່ງກ່າວທຸກໆວັນຕາມຄຳສັ່ງຂອງທ່ານໝໍສຳລັບສຸຂະພາບ ແລະ ອະນາຄົດຂອງເຂົາເຈົ້າ. ວິທີດັ່ງກ່າວນີ້ເປັນການສະແດງຄວາມນັບຖື ແລະ ຄວາມເຫັນອົກເຫັນໃຈກັບເພື່ອນໆ? |

**7. ພາກສະຫຼຸບ**: ຍັງມີວິທີການທີ່ແຕກຕ່າງກັນໃນການປ້ອງກັນເຊື້ອ ເອດສ໌ໄອວີ HIV.

ໃນເລື່ອງຂອງການມີເພດສຳພັນ, ຖົງຢາງອະນາໄມສາມາດປ້ອງກັນການຖືພາ ແລະ ຍັງສາມາດປ້ອງກັນພະຍາດຕິດຕໍ່ທາງເພດສຳພັນ. ເພາະສະນັ້ນ ຖົງຢາງອະນາໄມເປັນສິ່ງທີ່ດີຫຼາຍ ເພາະວ່າທຸກວິທີການຈະຊ່ວຍປ້ອງກັນເຈົ້າເພື່ອບໍ່ໃຫ້ມີການການຖືພາ, ມີພຽງແຕ່ຖົງຢາງອະນາໄມເທົ່ານັ້ນທີ່ຈະປ້ອງກັນບໍ່ໃຫ້ມີການເຈືອປົນຂອງທາດແຫຼວໃນຮ່າງກາຍ. ພຽງແຕ່ໃຫ້ແນ່ໃຈວ່າຖົງຢາງອະນາໄມບໍ່ມີຮອຍຈີກຂາດ.

ມັນແມ່ນສິດທິ ແລະ ຄວາມຮັບຜິດຊອບຂອງແຕ່ລະຄົນທີ່ຈະໃຊ້ຖົງຢາງອະອາໄມທຸກຄັ້ງເມື່ອມີເພດສຳພັນ.

**ສະຫຼຸບບົດຮຽນສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນຂອງແມ່ຍິງ SRH**

**ເວົ້າວ່າ:** ກ່າວຄຳຂອບໃຈສຳລັບການຝຶກອົບຮົມ. ພວກເຮົາດີໃຈຫຼາຍທີ່ພວກເຮົາໄດ້ຮຽນຫຼາຍຢ່າງພຽງແຕ່ພາກຮຽນດຽວ. ກ່ອນພວກເຮົາຈະເລີກ ພວກເຮົາຈະສາທິດວິທີການໃຊ້ປຶ້ມຫົວນ້ອຍໃຫ້ ພວກເຈົ້າກ່ອນ.
**ແນະນຳ:** ໃຫ້ນັກຮຽນເປີດປຶ້ມນ້ອຍອອກມາ ແລະ ອະທິບາຍ
ໃນສ່ວນວິທີການຂອງໂຄງການການຮ່ວມມືພັດທະນາດ້ານໂພຊະນາການສຳລັບໂຮງຮຽນມັດທະຍົມໃນພາກສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ ພວກເຮົາສາມາດອະທິບາຍບາງຫົວຂໍ້ທີ່ສຳຄັນ. ນອກນັ້ນ, ຕາມຫຼັກສູດການສອນໃນໂຮງຮຽນ ພວກເຮົາຈະໄດ້ຮຽນກ່ຽວກັບການສຶກສາກ່ຽວກັບເລື່ອງເພດສຳພັນຕື່ມອີກ.
ອີກຢ່າງ ມັນຍັງມີຄຳຖາມຈຳນວນໜຶ່ງຕື່ມອີກ, ມີຂໍ້ສົງໄສຢູ່ໃນສະໝອງ. ປຶ້ມນ້ອຍຫົວນີ້ສະໜອງສິ່ງງ່າຍໆ ແລະ ທຳມະດາ ແຕ່ມີຂໍ້ມູນຂ່າວສານທາງສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນທີ່ຖືກຕ້ອງ.
ຖ້າຫາກເຈົ້າມີຂໍ້ສົງໄສບາງຢ່າງ, ເຈົ້າສາມາດເປີດເບິ່ງຂໍ້ມູນໃນປຶ້ມຫົວນ້ອຍໆ, ເບິ່ງວິດີໂອ, ຖາມເພື່ອນ ຫຼື ຖາມອາຈານເຈົ້າກໍໄດ້.

## ບົດທີ່ 6: ເພດສຶກສາ ແລະ ສຸຂະພາບຈະເລີນພັນ(SRH)

## ພາກທີ່ 2

## (ສຳລັບເດັກກຊາຍ)

## ບົດທີ່ 6 ເພສຶກສາດ ແລະ ສຸຂະພາບຈະເລີນພັນ (ສຳລັບເດັກກຊາຍ)

### ຄຳນຳ

**ການສຶກສາກ່ຽວກັບເພດ** ແມ່ນເວົ້າກ່ຽວກັບການຈະເລີນເຕີບໂຕ ແລະ ທຸກໆສິ່ງທີ່ກ່ຽວພັນກັບການຈະເລີນເຕີບໂຕ. ເຊິ່ງເວົ້າກ່ຽວກັບເລື່ອງການປ່ຽນແປງຂອງຮ່າງກາຍ ແລະ ມັນສະໝອງໃນເວລາທີ່ພວກເຮົາເຕີບໃຫຍ່ຂຶ້ນ ແລະ ເວົ້າກ່ຽວກັບວິທີການປົກປ້ອງສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ ລວມໄປເຖິງການປົກປ້ອງການລ່ວງລະເມີດທາງເພດ. ຈຸດປະສົງແມ່ນເພື່ອໃຫ້ຄວາມຮູ້ ແລະ ທັກສະແກ່ກຸ່ມໄວໜຸ່ມເພື່ອໃຫ້ມີການຕັດສິນໃຈທີ່ມີສຸຂະພາບແຂງແຮງ ແລະ ໄດ້ຮັບການບໍລິການທີ່ດີ ດັ່ງນັ້ນ ພວກເຂົາຈຶ່ງຈະໄດ້ມີສຸຂະພາບທີ່ແຂງແຮງໃນອະນາຄົດ.

ໄວໜຸ່ມຕ້ອງເຂົ້າໃຈເຖິງຂໍ້ມູນຂ່າວສານທີ່ແນ່ນອນເພື່ອຈະໄດ້ກະກຽມຕັດສິນໃຈທີ່ຈະມີສຸຂະພາບແຂງແຮງຕາມສະຖານະການໂດຍສະເພາະ.

ການສຶກສາກ່ຽວກັບເພດແມ່ນຈະໄດ້ຂຽນຂຶ້ນເພື່ອເດັກຍິງ ແລະ ເດັກຊາຍມີໄວ້ເພື່ອສຶກສາ. ໃນອະດີດ ຮູບແບບການສຶກສາລັກສະນະນີ້ແມ່ນສຸມໃສ່ສະເພາະແມ່ນເດັກຍິງເທົ່ານັ້ນ. ມີຫຼາຍໆຄົນເຄີຍມີຄວາມເຊື່ອວ່າເດັກຊາຍບໍ່ຈຳເປັນທີ່ຈະຕ້ອງມີຄວາມຮູ້ ແລະ ທັກສະຕ່າງໆກ່ຽວກັບເລື່ອງນີ້ ເພາະມັນບໍ່ໄດ້ກ່ຽງຂ້ອງກັບສຸຂະພາບຂອງພວກເຂົາ. ເຖິງຢ່າງໃດກໍຕາມ ປະຈຸບັນນີ້ອດັ່ງພວກເຮົາຮູ້ແລ້ວວ່າເດັກຊາຍ ແລະ ຊາຍທີ່ເປັນໄວໜຸ່ມຈຳເປັນຈະຕ້ອງໄດ້ມີຄວາມຮູ້ ແລະ ທັກສະດັ່ງກ່າວນີ້ເພື່ອໃຫ້ມີສຸຂະພາບແຂງແຮງ ແລະ ມີສາຍພົວພັນທາງດ້ານສຸຂະພາບທີ່ແຂງແຮງ.

ມັນຍັງເປັນໂອກາດສຳລັບກຸ່ມໄວໜຸ່ມທີ່ຈະຕ້ອງໄດ້ຮຽນຮູ້ກ່ຽວກັບ STIs ເຊິ່ງແມ່ນພະຍາດຕິດຕໍ່ທາງເພດສຳພັນລວມທັງ ເອດສ໌ໄອວີ HIV. STIs ສາມາດຕິດຕໍ່ໄດ້ໂດຍທາງທາດແຫຼວທີ່ມີໃນຮ່າງກາຍຂອງຄົນເຮົາເຊັ່ນ: ນ້ຳອະສຸຈິ , ນ້ຳເມືອກໃນຊ່ອງຄອດ ແລະ ໂດຍທາງເລືອດ. ພຽງແຕ່ມີການປ້ອງກັນທີ່ບໍ່ປອດໄພກໍສາມາດຕິດເຊື້ອເອດສ໌ໄດ້, ແຕ່ແນ່ນອນຢູ່ແລ້ວ ຖ້າມີຄູ່ນອນຫຼາຍຄົນກໍຍິ່ງມີຄວາມສ່ຽງເພີ່ມຂຶ້ນ. ພະຍາດຕິດຕໍ່ທາງເພດສຳພັນ STIs ບາງຊະນິດກໍສາມາດປິ່ນປົວໃຫ້ຫາຍຂາດໄດ້ ແຕ່ບາງຊະນິດພຽງແຕ່ສາມາດຮັກສາໄດ້ແຕ່ບໍ່ຫາຍຂາດ. ເຖິງຢ່າງໃດກໍຕາມ ຖ້າບໍ່

ຮັກສາໃຫ້ທັນເວລາພວກມັນກໍ່ຈະມີອາການຮ້າຍແຮງຂຶ້ນເລື້ອຍໆ, ມັນຈະໄປທຳລາຍອະໄວຍະອະສືບພັນຕ່າງໆໃນຮ່າງກາຍ ແລະ ເປັນສາເຫດເຮັດໃຫ້ເປັນໝັນ. ວິທີການປ້ອງກັນພະຍາດຕິດຕໍ່ທາງເພດສຳພັນ STIs ທີ່ດີທີ່ສຸດແມ່ນການຍົກເວັ້ນການມີເພດສຳພັນ ຫຼື ເວລາມີເພດສຳພັນຕ້ອງໄດ້ປ້ອງກັນ.

ການຮຽນຄວາມຮູ້ ແລະ ທັກສະທີ່ຈຳເປັນໃນເກນອາຍຸນີ້ຄືຈະມີຜົນປະໂຫຍດແກ່ເດັກນ້ອຍໃນເວລາທີ່ພວກເຂົາໃຫຍ່ຂຶ້ນມາ ແລະ ຈະໄດ້ກະກຽມວິທີປ້ອງກັນພະຍາດຕິດຕໍ່ທາງເພດສຳພັນ ພ້ອມທັງການຊອກຫາບ່ອນຮັກສາໃນທາງທີ່ເໝາະສົມ ແລະ ທັນເວລາ ເພື່ອສ້າງການສະໜັບສະໜູນສະພາບແວດລ້ອມສຳລັບການຮັກສາສຸຂະພາບສຳລັບທຸກໆຄົນ.

| ກອບເວລາການນຳສະເໜີກິດຈະກຳ ຫຼື ພາກຕ່າງໆຂອງບົດຮຽນ | | |
|---|---|---|
| **ລຳດັບກິດຈະກຳ** | **ຊື່ກິດຈະກຳ** | **ໄລຍະເວລາ** |
| **1.1** | ຄວາມເຂົ້າໃຈກ່ຽວກັບຕົນເອງສຳລັບເດັກຊາຍ | 60 ນາທີ (ພັກຜ່ອນ10 ນາທີ) |
| **2.1** | ວິທີປ້ອງກັນການຕັ້ງຄັນ(ການມີເພດສຳພັນທີ່ປອດໄພ) | 20 ນາທີ |
| **3.1** | ພະຍາດຕິດຕໍ່ທາງເພດສຳພັນSTIs ແລະ ເອດສ໌ໄອວີ HIVs | 20 ນາທີ |
| **4.1** | ບົດບາດການສະໜັບສະໜູນຂອງເພດຊາຍ | 20 ນາທີ |
| | | **120** ນາທີ |

**ການກະກຽມອຸປະກອນໂດຍລວມ**: ພິມເອກະສານຊ້ອນທ້າຍ **SRH** , ວິດີໂອ, ປຶ້ມນ້ອຍ, ປ້າຍຮູບຮ່າງຂອງເພດຍິງ ແລະ ເພດຊາຍ, ສະຕິກເກີອະໄວຍະວະເພດຊາຍ ແລະ ອະໄວຍະເພດຍິງ, ຜ້າອະນາໄມ(ໂກເຕັກ), ສະບູ ແລະ ຊຸດຊັ້ນໃນ(ສະລິບ).

**ເວລາ**: 120 ນາທີ (ລວມທັງເວລາພັກຜ່ອນ)

**ຄຳແນະນຳໂດຍລວມຂອງບົດຮຽນ:**

ສຳລັບໂມດູນສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນສຳລັບເດັກຍິງ ແລະ ເດັກຊາຍ ແມ່ນຈະແຍກກຸ່ມກັນ. ໃນເວລາເຮັດກິດຈະກຳນັກຮຽນຍິງແມ່ນຈະໄດ້ຢູ່ກັບອາຈານຍິງ ແລະ ນັກຮຽນຊາຍແມ່ນຈະໄດ້ຢູ່ກັບອາຈານຊາຍ.

## ກິດຈະກຳ 1.1 ຄວາມເຂົ້າໃຈກ່ຽວກັບຕົນເອງສຳລັບເດັກຊາຍ

**ຄຳແນະນຳສຳລັບຜູ້ນຳພາກິດຈະກຳເພື່ອນສອນເພື່ອນ:**

**ພາກຄຳແນະນຳສຳລັບກິດຈະກຳ:** ໃນກິດຈະກຳນີ້ ເຈົ້າຈະໄດ້ຊ່ວຍແນະນຳສະມາຊິກພາຍໃນກຸ່ມຂອງເຈົ້າຮຽນຮູ້ກ່ຽວກັບການຈະເລີນເຕີບໂຕ. ພວກເຂົາຈະເຂົ້າໃຈວ່າຮ່າງກາຍ ແລະ ຈິດຕະວິທະຍາຂອງເດັກຍິງ ແລະ ເດັກຊາຍມີການປ່ຽນແປງເມື່ອພວກເຂົາໃຫຍ່ຂຶ້ນ ແລະ ການປ່ຽນແປງດັ່ງກ່າວນີ້ມັນເປັນເລື່ອງປົກກະຕິ.

ການຈະເລີນເຕີບໂຕຈະມີຄວາມແຕກຕ່າງໄປຕາມແຕ່ລະໄລຍະເຊິ່ງໃນຊ່ວງອາຍຸ 10 ປີ -19 ປີ ເຮົາເອີ້ນວ່າກຸ່ມໄວໜຸ່ມ. ໃນຊ່ວງໄລຍະອາຍຸ 10-14 ປີ ມັນເປັນຊ່ວງພິເສດຫຼາຍ ແລະ ໃນຊ່ວງໄລຍະນີ້ຮ່າງກາຍ, ມັນສະໝອງ ແລະ ຄວາມຮູ້ສຶກຈະມີການປ່ຽນແປງ ແລະ ຂະຫຍາຍຕົວ. ເຊິ່ງການປ່ຽນແປງທັງໝົດເຫຼົ່ານີ້ເອີ້ນວ່າ "**ໄວຈະເລີນພັນ** '**ກາຍເປັນຜູ້ໃຫຍ່**'" ສິ່ງດັ່ງກ່າວນີ້ໝາຍເຖິງວ່າເຈົ້າຈະບໍ່ໄດ້ເປັນເດັກນ້ອຍອີກຕໍ່ໄປ ແຕ່ກໍຍັງບໍ່ໄດ້ໝາຍຄວາມວ່າເປັນຜູ້ໃຫຍ່ພຽງພໍ. ໃນຊ່ວງນີ້ເປັນໄລຍະທີ່ມີຄວາມທ້າທາຍ ແລະ ມີຄວາມສັບສົນຫຼາຍ ແຕ່ມັນກໍເປັນໜ້າຕື່ນເຕັ້ນ. ທີ່ເຈົ້າ

ກໍາລັງໃຫຍ່ຂຶ້ນ! ຮ່າງກາຍປ່ຽນແປງແມ່ນເປັນໜ້າສົນລະເສີນຫຼາຍກວ່າຄວາມຢ້ານກົວ ເພາະວ່າພວກມັນເປັນສັນຍານເຕືອນວ່າ ທ່ານກໍາລັງກ້າວໄປຂ້າງໜ້າກັບຊີວິດ.

**ເວລາ: 60 ນາທີ** (ພັກຜ່ອນ 10 ນາທີ)

**ການກະກຽມອຸປະກອນ:**

- **ພິມ**ຮູບຮ່າງຂອງເພດຊາຍ ແລະ ເພດຍິງອອກມາ(ໂດຍອີງໃສ່ເອກະສານຊ້ອນທ້າຍ **SRH**)
- **ປ້າຍຮູບຮ່າງ**ຮ່າງກາຍຂອງເພດຊາຍ ແລະ ເພດຍິງ
- **ໂປດສເຕີ/ແຜນພູມ**ການປ່ຽນແປງຮູບຮ່າງພາຍນອກຂອງເດັກຍິງ ແລະ ເດັກຊາຍ
- **ສະຕິກເກີ** ອະໄວຍະວະສືບພັນ, ຈຸລັງໄຂ່, ເມັດເລືອດ ແລະ ຈຸລັງເຊື້ອອະສຸຈິ ຂອງເພດຊາຍ ແລະ ເພດຍິງ

## ເລີ່ມກິດຈະກໍາ

1. **ພາກຄໍາແນະນໍາກ່ຽວກັບບົດຮຽນ. ອ່ານໃຫ້ດັງ:** ມື້ນີ້ພວກເຮົາຈະໄດ້ເວົ້າກ່ຽວກັບການປ່ຽນແປງຂອງຮ່າງກາຍທີ່ພວກເຮົາເຄີຍເປັນມາກ່ອນໜ້ານີ້ (ທັງພາຍໃນ ແລະ ພາຍນອກ) ແລະ ຄວາມຮູ້ສຶກໃນເວລາພວກເຮົາເຕີບໃຫຍ່ຂຶ້ນ.
   ຈາກນັ້ນ ພວກເຮົາຍັງຈະໄດ້ຮຽນຮູ້ກ່ຽວກັບການມີປະຈໍາເດືອນ ແລະ ການຕັ້ງຄັນ(ການຖືພາ)
2. **ເວົ້າວ່າ**....ເມື່ອພວກເຮົາໃຫຍ່ຂຶ້ນ, ຮ່າງກາຍຂອງພວກເຮົາກໍ່ຈະເລີ່ມມີການປ່ຽນແປງ. ເບື້ອງຕົ້ນໃຫ້ພວກເຮົາມາເວົ້າກ່ຽວກັບການປ່ຽນແປງທາງພາຍນອກກ່ອນ.
3. **ຈັດແບ່ງ**ນັກຮຽນອອກເປັນສອງກຸ່ມ ພ້ອມຢາຍຮູບຮ່າງເປືອຍກາຍຂອງເພດຍິງໃຫ້ກຸ່ມໜຶ່ງ ແລະ ຢາຍຮູບຮ່າງເປືອຍກາຍຂອງເພດຊາຍໃຫ້ອີກກຸ່ມໜຶ່ງ.
4. ຈາກນັ້ນ**ແນະນໍາ**ໃຫ້ພວກເຂົາແຕ້ມການປ່ຽນແປງ(ທາງດ້ານຮ່າງກາຍ)ທີ່ພວກເຂົາເຊື່ອວ່າມັນຈະເກີດຂຶ້ນກັບເດັກຍິງ ແລະ ເດັກຊາຍໃນຂະນະທີ່ພວກເຂົາເຕີບໃຫຍ່ຂຶ້ນ
5. **ໃຫ້**ເວລາພວກເຂົາ 5 ນາທີເພື່ອແຕ້ມໃຫ້ສໍາເລັດ. ຫຼັງຈາກ ແຕ້ມສໍາເລັດແລ້ວໃຫ້ພວກເຂົານໍາເອົາພາຍທີ່ພວກເຂົາແຕ້ມນັ້ນຂຶ້ນມານໍາສະເໜີ. ຈາກນັ້ນ ສະເຫຼີຍຄໍາຕອບທີ່ຖືກຕ້ອງໃຫ້ແກ່ພວກເຂົາ.

| ການປ່ຽນແປງຮູບຮ່າງພາຍນອກ | |
|---|---|
| **ເດັກຍິງ** | **ເດັກຊາຍ** |
| ເຈົ້າຈະເຕີບໂຕສູງຂຶ້ນ | ຈະເຕີບໂຕສູງຂຶ້ນ |
| ສະໂພກຈະໃຫຍ່ຂຶ້ນ | ໜ້າເອິກຈະໃຫຍ່ຂຶ້ນ |
| ສຽງຂອງເຈົ້າຈະປ່ຽນ | ສຽງຈະແຫບ |
| ເຕົ້ານົມຈະໃຫຍ່ຂຶ້ນ | ຂົນຈະປົ່ງຂຶ້ນຢູ່ຕາມຂີ້ແຮ້ ແລະ ຈຸດລັບຕ່າງໆ. ສໍາລັບເດັກຊາຍບາງຄົນຈະປົ່ງຂຶ້ນບໍລິເວນໃບໜ້າ ແລະ ໜ້າເອິກ |
| ຈະມີຂົນປົ່ງຂຶ້ນຢູ່ຈຸດລັບ(ໝອຍ) | ເຈົ້າອາດຈະຝັນປຽກ(ຝັນວ່າໄດ້ມີເພດສໍາພັນກັບໃຜຜູ້ໜຶ່ງເຮັດໃຫ້ມີນໍ້າອະສຸຈິຫຼັ່ງອອກມາ) |
| ຈະເລີ່ມມີປະຈໍາເດືອນ | ຈະເລີ່ມມີເຫື່ອຫຼາຍຂຶ້ນ |
| ຈະເລີ່ມມີເຫື່ອຫຼາຍຂຶ້ນ | ໃບໜ້າຂອງເຈົ້າຈະມັນຂຶ້ນ ເຊິ່ງເປັນຕົ້ນເຫດຂອງການເກີດເປັນສິວ |
| ໃບໜ້າຂອງເຈົ້າຈະມັນຂຶ້ນ ເຊິ່ງເປັນຕົ້ນເຫດຂອງການເກີດເປັນສິວ | |

6. **ສົມທຽບ**ຮູບພາບທີ່ພວກເຂົາແຕ້ມໃສ່ຕາຕະລາງຂ້າງເທິງນັ້ນ ແລ້ວຕື່ມຂໍ້ມູນຕ່າງໆໃສ່ຕາມຄວາມຕ້ອງການ.
7. **ອ່ານດັງ:** ດຽວນີ້ ຂ້ອຍຕ້ອງການໃຫ້ເຈົ້າເວົ້າກ່ຽວກັບການປ່ຽນແປງທາງອາລົມ(ຄວາມຮູ້ສຶກ)ທີ່ເກີດຂຶ້ນໃນສະມາຊິກຂອງເພດກົງກັນຂ້າມ. ອາລົມແມ່ນຄວາມຮູ້ສຶກເຊັ່ນວ່າ ຄວາມດີໃຈ ຫຼື ເສຍໃຈ.

- ມື້ໜຶ່ງຮູ້ສຶກດີໃຈ ແລະ ມື້ໜຶ່ງຮູ້ສຶກເສຍໃຈໃນທັນທີ ຫຼື ມື້ຕໍ່ມາຮູ້ສຶກວ່າສັບສົນ
- ຮູ້ສຶກລະອຽດອ່ອນຖ້າປຽບທຽບກັບຕົນເອງ ແລະ ໝູ່ເພື່ອນ
- ຮູ້ສຶກວ່າຕ້ອງການເຮັດໃຫ້ຄົນອື່ນເພິ່ງພໍໃຈ ແລະ ຮູ້ສຶກບໍ່ແຕກຕ່າງຈາກເພື່ອນໆ
- ຮູ້ສຶກຕ້ອງການໃຫ້ຄົນອື່ນເຂົ້າໃຈຄວາມຮູ້ສຶກຂອງຕົນເອງ
- ຮູ້ສຶກຢາກສ້າງຄວາມດຶງດູດເພດຕົງກັນຂ້າມ

8. **ເວົ້າວ່າ** ດຽວນີ້ ມາເວົ້າກ່ຽວກັບການປ່ຽນແປງທາງພາຍໃນຮ່າງກາຍ:
9. **ຕິດ** ແຜນປ້າຍຮູບຮ່າງຂອງຮ່າງກາຍຂອງເພດຍິງ ແລະ ເພດຊາຍໄວ້ເທິງຝາ
10. **ເຊີນ** ກຸ່ມພ້ອມທັງແນະນຳໃຫ້ເຂົາເລືອກສະຕິກເກີອະໄວຍະວະເພດຍິງ ແລະ ເພດຊາຍຈາກກ່ອງບັນຈຸສະຕິກເກີ ແລ້ວນຳມາຕິດແປະໃສ່ປ້າຍຮູບຮ່າງຂອງຮ່າງກາຍ.
11. **ກວດກາ ແລະ ຕິດສະຕິກເກີ**ຢ່າງຖືກຕ້ອງ ຖ້າເຫັນວ່າຈຳເປັນ.

**ຈຸລັງໄຂ່**




**ທໍ່ສົ່ງໄຂ່**: ໄຂ່ເດີນທາງຈາກຮອຍໄຂ່ໄປຫາມົດລູກດ້ວຍທໍ່ສົ່ງໄຂ່

**ຮອຍໄຂ່:** ສິ່ງເຫຼົ່ານີ້ຜະລິດໄຂ່. ມີຮອຍໄຂ່ໃນ 2ຟາກຂ້າງຂອງປີກມົດລູກ.

**ມົດລູກ:** ມັນເປັນກ້າມເນື້ອເປັນຜົ້ງ ເລືອດປະຈຳເດືອນຂອງເຈົ້າແມ່ນມາຈາກມົດລູກ ແລະ ມັນເປັນບ່ອນທີ່ເດັກນ້ອຍມີການຈະເລີນເຕີບໂຕຖ້າເຈົ້າຖືພາ.

**ອະໄວຍະວະເພດຍິງ(ຫີ):** ສິ່ງດັ່ງກ່າວນີ້ເປັນບ່ອນທີ່ເລືອດປະຈຳເດືອນຕົກອອກມາທາງນອກ. ນອກນັ້ນ ມັນຍັງເປັນບ່ອນຜະລິດນ້ຳເມືອກທີ່ຊ່ວຍໃຫ້ບໍລິເວນຊ່ອງຄອດສະອາດ.

12. **ອ່ານໂດຍໃຊ້ສຽງດັງ :**ໃນເບື້ອງຕົ້ນ ,ພວກເຮົາຈະອະທິບາຍກ່ຽວກັບໜ້າທີ່ຂອງອະໄວຍະວະຕ່າງໆໃນຮ່າງກາຍຂອງເພດຍິງ ແລະ ຕໍ່ໄປພວກເຮົາຈະໄດ້ເວົ້າກ່ຽວກັບບົດບາດຂອງອະໄວຍະວະໃນຮ່າງກາຍຂອງເພດຊາຍ.
13. **ເວົ້າວ່າ** ຮ່າງກາຍຂອງເຈົ້າເລີ່ມປ່ອຍຈຸລັງໄຂ່. ດັ່ງທີ່ສະແດງໃຫ້ເຫັນການຕົກຂອງຈຸລັງໄຂ່.
14. **ອ່ານໃຫ້ດັງ:** ຈຸລັງໄຂ່ຂອງເຈົ້າຈະມີການຕົກເດືອນລະຄັ້ງ. ໄຂ່ຈະຕົກຈາກຮອຍໄຂ່ ແລະ ເຄື່ອນຕົວຜ່ານທາງທໍ່ສົ່ງໄຂ່ໄປຫາມົດລູກ. ຖ້າຫາກໄຂ່ດັ່ງກ່າວບໍ່ໄດ້ຮັບການປະຕິສົນທິ(ປະສົມພັນ)ໄຂ່ກໍ່ຈະຕົກອອກຈາກ

ຮ່າງກາຍເປັນປະຈໍາເດືອນ. ເລືອດຈະໄຫຼອອກມາຈາກອະໄວຍະວະເພດຂອງເຈົ້າສິ່ງດັ່ງກ່າວນີ້ເອີ້ນວ່າ ປະຈໍາເດືອນ.

**15.** **ເອົ້າວ່າ** ພວກເຮົາຈະເວົ້າກ່ຽວກັບປະຈໍາເດືອນຂອງເຈົ້າອີກໃນຕອນຕໍ່ໄປ. ແຕ່ທໍາອິດນີ້ ມາເວົ້າກ່ຽວກັບສິ່ງທີ່ເກີດຂຶ້ນຖ້າຫາກວ່າໄຂ່ໄດ້ຮັບການປະຕິສົນທິ(ປະສົມພັນ). ເລືອດຈະມີການເຄື່ອນຕົວນໍາເອົາຈຸລັງໄຂ່ກັບຄືນໄປໃນທໍ່ສົ່ງໄຂ່.

**16.** **ເອົ້າວ່າ** ດຽວນີ້ ເຮົາມາເວົ້າກ່ຽວກັບອະໄວຍະວະເພດຊາຍ. ສິ່ງທີ່ເປັນຄວາມລັບຊາຍເຄື່ອນທີ່ຜ່ານອະໄວຍະວະເພດນັ້ນເອີ້ນວ່າ ນໍ້າອະສຸຈິ(ນໍ້າເຊື້ອ). ໃນທາດແຫຼວທີ່ເປັນຄວາມລັບດັ່ງກ່າວມັນຈະມີຈຸລັງທີ່ເອີ້ນວ່າ ເຊື້ອອະສຸຈິ(ນໍ້າກາມ) ຈຸລັງເຊື້ອອະສຸຈິມັນນ້ອຍຫຼາຍເຮົາບໍ່ສາມາດເບິ່ງເຫັນໄດ້ດ້ວຍຕາເປົ່າ ຫຼື ໂດຍປາສະຈາກກ້ອງຈຸລະທັດ. ສະແດງຮູບຈຸລັງເຊື້ອອະສຸຈິ




**17.** **ເອົ້າວ່າ** ແມ່ນຫຍັງເກີດຂຶ້ນເມື່ອເຮົາເຕີບໃຫຍ່ຂຶ້ນມາ ແລະ ພວກເຮົາຄືກັບຄົນອື່ນເຂົາບໍ່**?**

*ຖ້າເບິ່ງວ່າຈະມີໃຜຕອບບໍ່.*

**ຈຸດທີ່ຕ້ອງໄດ້ອະທິບາຍ**: ຄົນຮັກກັນ... ແລະ ໃນເມື່ອພວກເຂົາຮູ້ສຶກວ່າເຂົາພ້ອມ ພວກເຂົາອາດຈະຕ້ອງການມີເພດສໍາພັນ. ຕາມປົກກະຕິແລ້ວໃນເວລາມີເພດສໍາພັນລະຫວ່າງເພດຊາຍ ແລະ ເພດຍິງຈະມີຫຍັງເກີດຂຶ້ນ? ອະໄວຍະວະເພດຊາຍຈະເຂົ້າໄປໃນອະໄວຍະວະເພດຍິງ. ໃນຂະນະດຽວກັນນີ້ ເພດຊາຍຈະມີຄວາມຮູ້ສຶກດີ(ເລົ້າໃຈ) ແທ້ໆ, ອະໄວຍະວະ

ເພດຂອງເພດຊາຍຈະຫຼັ່ງນໍ້າອະສຸຈິອອກມາ(ແລະ ສິ່ງທີ່ເຄື່ອນທີ່ໄປນໍານໍ້າອະສຸຈິຂອງລາວນັ້ນແມ່ນຈຸລັງເຊື້ອອະສຸຈິ). ຈາກນັ້ນ ຈຸລັງເຊື້ອອະສຸຈິຈະມີການແຂ່ງຂັນກັນເຂົ້າໄປຫາຈຸລັງໄຂ່ຂອງເພດຍິງ. ຈຸລັງເຊື້ອອະສຸຈິລອຍເຂົ້າໄປໃນມົດລູກຈົນເຂົ້າໄປເຖິງຈຸລັງໄຂ່ທີ່ຢູ່ໃນທໍ່ສົ່ງໄຂ່. ຖ້າຫາກວ່າ ຈຸລັງເຊື້ອອະສຸຈິຕົວໃດແຂງແຮງ ແລະ ສາມາດເຂົ້າໄປເຖິງກ່ອນມັນກໍ່ຈະ "ເກີດການປະຕິສົນທິ 'ປະສົມພັນ'" ກັບຈຸລັງໄຂ່ ຈາກນັ້ນ ກໍ່ຈະໄດ້ກໍ່ຕົວເປັນເດັກນ້ອຍ. ຈາກນັ້ນ ເມື່ອຈຸລັງໄຂ່ ແລະ ຈຸລັງເຊື້ອອະສຸຈິມີການປະຕິສົນທິ(ປະສົມພັນ)ແລ້ວ ພວກມັນກໍຈະມີການເຄື່ອນຍ້າຍຈຸລັງໄຂ່ ແລະ ຈຸລັງເຊື້ອອະສຸຈິເຂົ້າໄປໃນມົດລູກ ແລະ ໄປຕິດຢູ່ກັບຝາຜະໜັງມົດລູກ. ສິ່ງດັ່ງກ່າວເປັນວິທີທີ່ແມ່ຍິງມີການຕັ້ງຄັນ(ຖືພາ).

18. **ເວົ້າວ່າ** 'ດັ່ງທີ່ພວກເຮົາເຫັນ, ມັນຕ້ອງໃຊ້ຄົນສອງຄົນ(ເພດຊາຍ ແລະ ເພດຍິງ) ໃນການເຮັດໃຫ້ມີເດັກ ເພາະສະນັ້ນ ການມີເພດສຳພັນຄວນຈະເປັນຄວາມຮັບຜິດຊອບລະຫວ່າງຄົນສອງຄົນ'.
19. **ພາກສະຫຼຸບ**: ທວນຄືນວິທີການທັງສອງອີກຄັ້ງ. ສະເໜີເອົາອາສາສະໝັກຂຶ້ນມາຢືນຢູ່ຕໍ່ໜ້າຫ້ອງ. ຕັ້ງຖາມຄຳກັບນັກຮຽນໃນຫ້ອງດ້ວຍຄຳຖາມທີ່ໄດ້ຈາກກ່ອງທີ່ຂຽນໄວ້ຂ້າງລຸ່ມນີ້ ແລະ ອາສາສະໝັກຕ້ອງໄດ້ຕອບຄຳຖາມຂອງພວກເຂົາດ້ວຍການສະແດງຮູບພາບ.

**ຄຳຖາມທີ່ສຳຄັນເພື່ອທວນຄືນບົດຮຽນໂດຍຫຍໍ້**

- ເດັກຍິງມີຫຍັງແດ່ຢູ່ໃນອະໄວຍະວະເພດຂອງເຂົາເຈົ້າ? ພວກເຂົາປ່ອຍຫຍັງອອກມາໃນແຕ່ລະເດືອນ?
- ຖ້າຈຸລັງໄຂ່ບໍ່ໄດ້ຮັບການປະຕິສົນທິ(ປະສົມພັນ) ແມ່ນຫຍັງຈະເກີດຂຶ້ນ?
- ການປະຕິສົນທິ(ປະສົມພັນ)ກິດຂຶ້ນດ້ວຍວິທີໃດ? ເດັກຊາຍມີຫຍັງແດ່ຢູ່ໃນອະໄວຍະວະເພດຂອງພວກເຂົາ?
- ຈົ່ງອະທິບາຍແມ່ນຫຍັາຈະເກີດຂຶ້ນໃນເວລາມີເພດສຳພັນລະຫວ່າາເພດຍິາ ແລະ ເພດຊາຍ.

## ກິດຈະກຳ 2.1 ວິທີປ້ອງກັນການຕັ້ງຄັນ (ການມີເພດສຳພັນທີ່ປອດໄພ)

**ຄຳແນະນຳສຳລັບຜູ້ນຳພາກິດຈະກຳເພື່ອນສອນເພື່ອນ**

**ພາກຂໍ້ມູນຂ່າວສານສຳລັບກິດຈະກຳ:** ໃນກິດຈະກຳນີ້ ເຈົ້າຈະໄດ້ຊ່ວຍແນະນຳສະມາຊິກພາຍໃນກຸ່ມຂອງເຈົ້າຮຽນຮູ້ກ່ຽວກັບສິ່ງທີ່ເປັນຜົນສະທ້ອນຂອງການຕັ້ງຄັນໃນຈຳນວນເດັກຍິງ ແລະ ເດັກຊາຍ.

**ຈຸດປະສົງ:** ມາຮຽນກ່ຽວກັບການມີເພດສຳພັນທີ່ປອດໄພ (ວິທີການຄຸມກຳເນີດ, ຄວາມສຳຄັນຂອງການມີລູກໃນໄວອັນຄວນ, ຄວາມສຳຄັນຂອງການເວົ້າເຖິງເລື່ອງກ່ຽວກັບບັນຫາ)

**ເວລາ:** 20 ນາທີ (ລວມທັງເວລາພັກຜ່ອນ)

**ການກະກຽມອຸປະກອນ:** ວິດີໂອຄຳແນະນຳການຄຸມກຳເນີດ(2:07), https://youtu.be/5t6Wt4oxUL8 ຮູບພາບຄອບຄົວໃຫຍ່ ແລະ ຄອບຄົວນ້ອຍ, ສະຕິກເກີຖົງຢາງອະນາໄມ ແລະ ອະໄວຍະວະເພດຊາຍ

### ເລີ່ມກິດຈະກຳ

1. **ພາກຄຳແນະນຳກ່ຽວກັບບົດຮຽນ. ອ່ານໂດຍໃຊ້ສຽງດັງ:** ດຽວນີ້ ເຈົ້າເຂົ້າໃຈກ່ຽວກັບວິທີການຂອງການກໍ່ຕົວເປັນເດັກແລ້ວ, ຕໍ່ໄປນີ້ພວກເຈົ້າຈະໄດ້ຮຽນຮູ້ກ່ຽວກັບຄວາມສຳຄັນຂອງການຫຼີກລ່ຽງການຕັ້ງຄັນ(ການຖືພາ).
2. **ຖາມ** ເມື່ອໃດແມ່ຍິງຈຶ່ງຄວນຈະເລີ່ມຕົ້ນຖືພາ? (ລໍຖ້າຄຳຕອບວ່າຈະມີໃຜຕອບບໍ່)
3. **ອ່ານໂດຍໃຊ້ສຽງດັງ:**

- ແມ່ ແລະ ເດັກຈະແຂງແຮງທີ່ສຸດ ເມື່ອຜູ້ເປັນແມ່ມີອາຍຸເຖິງ 20 ປີ ຮ່າງກາຍຂອງເດັກຍິງ ແລະ ເດັກຊາຍໄດ້ຮັບການພັດທະນາຢ່າງເຕັມທີ່ກ່ອນການຖືພາ.
- ຖ້າພວກເຈົ້າຍັງນ້ອຍຫຼາຍການຖືພາມັນອາດຈະເປັນອັນຕະລາຍໄດ້
- ເດັກຍິງທີ່ຖືພາໄວອາດຈະມີຄວາມຮູ້ສຶກວ່າມີຄວາມເຈັບປວດຮ້າຍແຮງ ຫຼື ບໍ່ ກໍອາດຈະເຖິງຂັ້ນເສຍຊີວິດໄດ້ເພາະວ່າ ຮ່າງກາຍຂອງເຈົ້າກຳລັງຈະເລີນເຕີບໂຕ ແລະ ກຳລັງພັດທະນາ. ເຈົ້າອາດຈະຍັງບໍ່ທັນພ້ອມທີ່ຈະໃຊ້ກຳລັງແຮງທາງຮ່າງກາຍ ແລະ ທາງຈິດໃຈ.

- ເດັກຖືພາໄວອາດຈະພາດໂອກາດຫຼາຍໆຢ່າງໃນຊີວິດເຊິ່ງເປັນຜົນກະທົບຕໍ່ການຮຽນຮູ້ ແລະ ການຫາລ້ຽງຊີບໃນຊ່ວງປະຈຸບັນເຖິງອະນາຄົດຂອງເຂົາເຈົ້າ.
- ຖ້າຫາກເຈົ້າມີລູກມັນສາມາດເປັນອັນຕະລາຍຕໍ່ເຈົ້າ ແລະ ລູກຂອງເຈົ້າ. ເຈົ້າອາດຈະໄດ້ອອກໂຮງຮຽນ ເພາະເຈົ້າຈະຕ້ອງໄດ້ດູແລລູກຂອງເຈົ້າແທນ.
- ເດັກເກີດໃນລູກຫົວສາວອາດຈະເກີດໄວກວ່າປົກກະຕິ, ຕົນຕົວນ້ອຍ, ຫຼື ມີອາການປ່ວຍຫຼາຍ. ມັນມີຄວາມສ່ຽງຫຼາຍຕໍ່ກັບເດັກທີ່ເກີດກ່ອນໄວອັນຄວນ ຫຼື ຕົນຕົວນ້ອຍ. ເຖິງແມ່ນວ່າ ເດັກຈະລອດຊີວິດແຕ່ພວກເຂົາກໍຈະປະເຊີນກັບບັນຫາສຸຂະພາບດ້ວຍການເຈັບປ່ວຍຢູ່ເລື້ອຍໆໃນອະນາຄົດ.

**4.** **ເວົ້າ**ເປັນປະຈຳ, ພໍ່ແມ່ທີ່ຍັງນ້ອຍ/ ພໍ່ແມ່ທີ່ມີອາຍຸນ້ອຍມີລູກຫຼາຍຄົນ. ສະແດງຮູບພາບຄອບຄົວທີ່ໃຫຍ່ ແລະ ຄອບຄົວນ້ອຍ. ໃຫ້ສົນທະນາຄວາມໄດ້ປຽບ ແລະ ເສຍປຽບຂອງຄອບຄົວໃຫຍ່.





**5.** **ອ່ານໂດຍໃຊ້ສຽງດັງ:** ເມື່ອໃດແກ່ຂຶ້ນ ຄົນເຮົາສາມາເລືອກວິທີການຄຸມກຳເນີດເພື່ອປ້ອງກັນການຖືພາໂດຍບໍ່ໄດ້ຕັ້ງໃຈ. ເລືອກວິທີການລວມທັງການໃຊ້ຖົງຢາງອະນາໄມ, ການສັກຢາຄຸມ, ກິນຢາຄຸມ ແລະ ວິທີການອື່ນໆ. ດຽວນີ້ ວິດີໂອຈະສະແດງໃຫ້ເຈົ້າເຫັນວິທີການແນະນຳວິທີການຄຸມກຳເນີດ.

**6.** **ເປີດວິດີໂອ** ການແນະນຳວິທີການຄຸມກຳເນີດ (2:07), ***(ທາງເລືອກ)*** https://youtu.be/5t6Wt4oxUL8

**7.** **ຢາຍ**ປຶ້ມນ້ອຍໃຫ້ນັກຮຽນ ແລ້ວແນະນຳໃຫ້ເຂົາເຈົ້າເປີດປຶ້ມ ໜ້າທີ່ 11.

**8.** ດັ່ງທີ່ເຈົ້າໄດ້ເຫັນຢູ່ໃນໜ້າທີ່ 11, ເຊິ່ງມັນມີຫຼາຍວິທີໃນການຄຸມກຳເນີດທີ່ແຕກຕ່າງກັນ. ວິທີ 'ທີ່ງ່າຍທີ່ສຸດ' (ວິທີທີ່ຍອມຮັບໄດ້ຫຼາຍທີ່ສຸດ, ວິທີທີ່ສະດວກທີ່ສຸດ) ແລະ ວິທີທີ່ຮູ້ຈັກກັນຫຼາຍທີ່ສຸດໃນສັງຄົມຢ່າງກວ້າງຂວາງແມ່ນວິທີການໃຊ້ຖົງຢາງອະນາໄມ.
ກະລຸນາເປີດປຶ້ມ ໜ້າທີ່ 12

**ຖົງຢາງອະນາໄມ** ແມ່ນຄ້າຍຄືຖົງເທົ້າ(ຖົງຕີນ)ສຳລັບສຸບໃສ່ອະໄວຍະວະເພດຊາຍກ່ອນເພດຊາຍ ແລະ ເພດຍິງຈະມີເພດສຳພັນ; ເພດຊາຍຈະສວມຖົງຢາງອະນາໄມໃສ່ໃນອະໄວຍະວະເພດ(ໂຄຍ)ຂອງຕົນເອງ ດັ່ງນັ້ນ ນ້ຳອະສຸຈິຈຶ່ງຈະບໍ່ສາມາດໄຫຼເຂົ້າໄປໃນຮ່າງກາຍຂອງເພດຍິງໄດ້. ເມື່ອນ້ຳອະສຸຈິບໍ່ສາມາດໄຫຼເຂົ້າໄປໃນຮ່າງການຂອງເພດຍິງ ມັນກໍຈະບໍ່ສາມາດເກີດການການປະຕິສົນທິ(ປະສົມພັນ)ກັບໄຂ່ຂອງເພດຍິງ ແລະ ດັ່ງນັ້ນ ຜູ້ຍິງຈຶ່ງບໍ່ສາມາດຖືພາໄດ້. ຖົງຢາງອະນາໄມຍັງເປັນສິ່ງທີ່ດີຫຼາຍມັນຍັງສາມາດປ້ອງກັບພະຍາດຕິດຕໍ່ທາງເພດສຳພັນເຊັ່ນ ເຊື້ອເອດສ **HIV** ແລະ ພະຍາດຕິດຕໍ່ທາງເພດສຳພັນອື່ນໆ STDs. ພວກເຮົາຈະອະທິບາຍເລື່ອງ ເອດສ໌ໄອວີ **HIV** ໃນກິດຈະກຳຕໍ່ໄປ




9. **ພາກສະຫຼຸບ:**

**ເນື້ອໃນສຳຄັນເພື່ອທວນຄືນບົດຮຽນໂດຍຫຍໍ້**

- ການຖືພາກ່ອນໄວອັນຄວນຈະເປັນອັນຕະລາຍຕໍ່ໄວໜຸ່ມ(ແມ່) ແລະ ລູກ.
- ມີຫຼາຍວິທີການຄຸມກຳເນີດ, ດັ່ງນັ້ນ ເປັນໄປໄດ້ບໍ່ທີ່ຈະມີການຮ່ວມເພດສຳພັນໂດຍບໍ່ໃຫ້ມີການຖືພາ.
- ຖົງຢ່າງອະນາໄມບໍ່ເປັນພຽງແຕ່ວິທີການຄຸມກຳເນີດ ມັນຍັງສາມາດປ້ອງກັນ ເຊື້ອເອດສ໌ໄດ້ HIV.
- ຖ້າທ່ານມີຂໍ້ສົງໄສໃຫ້ໄປພົບແພດ ຫຼື ຜູ້ຊ່ຽວຊານມືອາຊີບເພື່ອໃຫ້ຄຳປຶກສາ.
- ມັນເປັນສິ່ງສຳຄັນທີ່ບໍ່ອາຍເວົ້າເລື່ອງນີ້.

ສາມາດເຂົ້າເບິ່ງຂໍ້ມູນຂ່າວສານເພີ່ມເຕີມໄດ້ອີກກ່ຽວກັບສຸຂະພາບຈະເລີນພັນ. ຖ້າຫາກທ່ານຄົ້ນຫາຢູ່ໃນ ຢູທູບ *YouTube link* https://youtu.be/5t6Wt4oxUL8, ທ່ານຈະເຫັນວີດີໂອອະທິບາຍວິທີການຄຸມກຳເນີດໃນຫຼາຍວິທີທີ່ແຕກຕ່າງກັນ. ສະແດງປື້ມໜ້າສຸດທ້າຍໃຫ້ພວກເຂົາເບິ່ງ. ດັ່ງນັ້ນຖ້າທ່ານຢາກສຶກສາຕື່ມອີກທ່ານສາມາດເບິ່ງວີດີເຫຼົ່ານັ້ນໄດ້.

## ກິດຈະກຳ 3.1 ພະຍາດຕິດຕໍ່ທາງເພດສຳພັນ STIs ແລະ ເອດສ໌ໄອວີ 'ເຊື້ອເອດສ໌' HIVs

**ຄຳແນະນຳສຳລັບຜູ້ນຳພາກິດຈະກຳເພື່ອນສອນເພື່ອນ:**

**ພາກຄຳແນະນຳສຳລັບກິດຈະກຳ:** ໃນກິດຈະກຳນີ້ ເຈົ້າຈະໄດ້ຊ່ວຍແນະນຳສະມາຊິກພາຍໃນກຸ່ມຂອງເຈົ້າເພື່ອຮຽນຮູ້ກ່ຽວກັບວິທີປ້ອງກັນ ແລະ ຊອກຫາແຫຼ່ງປິ່ນປົວພະຍາດຕິດຕໍ່ທາງເພດສຳພັນ, ລວມທັງ ເຊື້ອ ເອດສ໌ HIV

**ຈຸດປະສົງ:** ແມ່ນຮຽນຮູ້ກ່ຽວກັບການມີເພດສຳພັນທີ່ປອດໄພ (ວິທີການຄຸມກຳເນີດ, ຄວາມສຳຄັນຂອງການເກີດລູກໃນໄວອັນຄວນ, ຄວາມສຳຄັນຂອງການເວົ້າເລື່ອງກ່ຽວກັບບັນຫາ)

**ເວລາ:** 20 ນາທີ

**ການກະກຽມອຸປະກອນ:** ຫົກຄຳແຈ້ງທີ່ພີມອອກສຳລັບ ເກມ **ຖືກ ຫຼື ຜິດ**

## ເລີ່ມກິດຈະກຳ

1. **ພາກຄຳແນະນຳສຳລັບກິດຈະກຳ. ອ່ານໂດຍໃຊ້ສຽງດັງ:** ດຽວນີ້ ພວກເຮົາຈະມາໂອ້ລົມກັນກ່ຽວກັບພະຍາດຕິດຕໍ່ທາງເພດສຳພັນ, ຊະນິດໜຶ່ງກໍ່ແມ່ນ ເຊື້ອເອດສ໌ໄອວີ HIV . ກັບພະຍາດຕິດຕໍ່ທາງເພດສຳພັນແມ່ນຄວາມເຈັບປ່ວຍທີ່ໄດ້ຈາກຄົນໜຶ່ງໄປສູ່ອີກຄົນໜຶ່ງໃນຊ່ວງເວລາມີເພດສຳພັນ.
2. **ຖາມ**ມີໃຜຮູ້ບໍວ່າ ເຊື້ອເອສ໌ໄອວີ HIV ແລະ ເອດສ໌ AIDS ແມ່ນຫຍັງ? ມີໃຜຮູ້ບໍ່ວ່າມັນມີການຕິດຕໍ່ກັນໄດ້ແນວໃດ?
3. **ອະທິບາຍ/ ອ່ານໃຫ້ດັງ**

**ເອດສ໌ໄອວີ (HIV)** ແມ່ນໄວຣັດທີ່ຄ່ອຍໆໂຈມຕີລະບົບພູມຄຸ້ມກັນຂອງມະນຸດ.
**HIV** ເອດສ໌ໄອວີ ແມ່ນໄວຣັດທີ່ເກີດຈາກການມີສ່ວນຮ່ວມທາງທາດແຫຼວຂອງຮ່າງກາຍກັບຄົນຜູ້ທີ່ມີເຊື້ອ ເອດສ໌ໄອວີ **HIV** ເຊັ່ນວ່າ: ເລືອດ, ທາດແຫຼວກ່ອນເກີດ, ນ້ຳອະສຸຈິ, ນ້ຳເມືອກໃນຊ່ອງຄອດ ແລະ ນ້ຳນົມ. ມັນບໍ່ສາມາດຕິດຕໍ່ໄດ້ຜ່ານທາງນ້ຳລາຍ ຫຼື ການຈັບບາຍກັບຄົນຜູ້ທີ່ມີເຊື້ອເອດສ໌ໄດ້, ດັ່ງນັ້ນ ທ່ານຈິ່ງບໍ່ຕິດເຊື້ອ ເອດສ໌ **HIV** ຈາກທາງການຈູບ, ການກິນອາຫານຮ່ວມກັນ ຫຼື ການຈັບມືກັບຜູ້ທີ່ມີເຊື້ອ ເອດສ໌ໄອວີ **HIV** ... ແຕ່ທ່ານສາມາດຕິດເຊື້ອໄດ້ຈາກການມີເພດສຳພັນທີ່ບໍ່ປ້ອງກັນ.
**Acquired Immune Deficiency Syndrome (AIDS)** ເອດສ໌ ແມ່ນສະພາບທາງການແພດທີ່ເກີດຈາກເຊື້ອ ເອດສ໌ໄອວີ **HIV**.

ຄົນທີ່ໄດ້ບົ່ງມະຕິວ່າມີເຊື້ອ ເອດສ໌ AIDS ເມື່ອພູມຄຸ້ມກັນຂອງພວກເຂົາຕໍ່າ

4. ດັ່ງຕໍ່ໄປນີ້ຈະແມ່ນ **ເກມ ຖືກ ຫຼື ຜິດ**: ພວກເຮົາມີເຈ້ຍຄຳຕອບຈຳນວນ 6 ໃບ ແລະ ໃຫ້ອ່ານໄປເທື່ອລະໃບ. ຈາກນັ້ນ ໃຫ້ທ່ານຕອບຄຳຕອບທີ່ຢູ່ໃນເຈ້ຍຄຳຕອບດັ່ງກ່າວໂດຍໃຊ້ຄຳວ່າ ຖືກ ຫຼື ຜິດ:
5. ພາຍຫຼັງທີ່ຂ້ອຍໄດ້ອ່ານເຈ້ຍຄຳຕອບ ຖ້າເຈົ້າເຫັນວ່າເຈ້ຍຄຳຕອບ "**ຖືກຕ້ອງ**" ເຈົ້າຕ້ອງລຸກຂຶ້ນ, ຖ້າວ່າເຫັນວ່າເຈ້ຍຄຳຕອບນັ້ນ "**ຜິດ**" ເຈົ້າຕ້ອງ **ຍົກມືຂຶ້ນ** ແລະ ຖ້າເຈົ້າ "**ບໍ່ຮູ້**" ໃຫ້**ນັ່ງຢູ່ເສີຍໆ**, ນັ່ງຢູ່ເສີຍໆ.

ວິດີໂອຈາກ **PSI:**

6. **ອ່ານເຈ້ຍຄຳຕອບທຳອິດ**: ແນະນຳໃຫ້ໜຶ່ງ ຫຼື ສອງຄົນອະທິບາຍຄຳຕອບຂອງພວກເຂົາ. ອະນຸຍາດໃຫ້ນັກຮຽນຜູ້ອື່ນໆສະເຫຼີຍຄຳຕອບທີ່ມັນຖືກ ຫຼື ຄຳຕອບທີ່ຖືກຕ້ອງຕາມທີ່ຕ້ອງການ.

**ກ. ເຈົ້າສາມາດສັງເກດເບິ່ງຄົນຜູ້ນັ້ນດ້ວຍສາຍຕາ ຖ້າເຂົາມີເຊື້ອ ເອດສ໌ HIV.**

**ຄຳຕອບແມ່ນ-ຜິດ.** ເຈົ້າບໍ່ສາມາດສັງເກດໄດ້ດ້ວຍຕາເປົ່າຖ້າວ່າ ຖ້າວ່າຄົນເຮົາມີເຊື້ອເອດສ໌

ສືບຕໍ່ໃນວິທີດຽວກັນນີ້ສຳລັບຄຳຕອບອື່ນໆ:

**ຂ) ເອດສ໌ ບໍ່ສາມາດຕິດຕໍ່ໄດ້ດ້ວຍການນຳເຊື້ອດ້ວຍຍຸງ**

**ຄຳຕອບແມ່ນ: ຖືກ.** ຍຸງບໍ່ສາມາດນຳເຊື້ອ ເອດສ໌ ໄດ້. ເຊື້ອ ເອດສ໌ ແມ່ນພົບເຫັນໃນເລືອດຂອງມະນຸດ. ແຕ່ມັນບໍ່ສາມາດແຜ່ເຊື້ອຢູ່ນຳຍຸງ. ເຖິງຢ່າງໃດກໍຕາມ ພະຍາດໄຂ້ເລືອດອອກສາມາດນຳເຊື້ອໄດ້ດ້ວຍຍຸງ.

**ຄ) ເຊື້ອ ເອດສ໌ ສາມາດນຳເຊື້ອໄດ້ໂດຍການມີເພດສຳພັນທີ່ບໍ່ໃຊ້ຖົງຢາງອະນາໄມ.**

| |
|---|
| **ຄຳຕອບແມ່ນ: ຖືກ.** ໃນເລື່ອງຂອງການມີເພດສຳພັນຖ້າບໍ່ສວມຖົງຢາງອະນາໄມ, ເອດສ໌ ສາມາດແຜ່ກະຈາຍຈາກຜູ້ຕິດເຊື້ອຄົນໜຶ່ງໄປສູ່ອີກຄົນໜຶ່ງ. ຖົງຢາງອະນາໄມເປັນວິທີທີ່ປ້ອງກັນເຊື້ອ ເອດສ໌ ຖ້າໃນເວລາມີເພດສຳພັນ. |

**ງ) ທາງທີ່ດີທີ່ສຸດໃນການປ້ອງກັນພະຍາດຕິດຕໍ່ລວມທັງ ເອດສ໌ ແມ່ນຫຼີກລ້ຽງການມີເພດສຳພັນ ຫຼື ໃຊ້ຖົງຢາງອະນາໄມໃນເວລາມີເພດສຳພັນກັບຄົນແປກໜ້າ ຫຼື ມີຄູ່ນອນຄົນດຽວຫຼັງຈາກນັ້ນຈະໄປກວດເລືອດຮ່ວມກັນ.**

| |
|---|
| **ຄຳຕອບແມ່ນ: ຖືກ**-- ທາງທີ່ດີທີ່ສຸດໃນການປ້ອງກັນ ເຊື້ອ ເອດສ໌ ຖ້າຫາກຈະມີເພດສຳພັນກັບໃຜຜູ້ໜຶ່ງແມ່ນໃຫ້ໃຊ້ຖົງຢາງອະນາໄມທຸກໆຄັ້ງ ແລະ ການມີຄູ່ນອນຄົນດຽວກໍເປັນວິທີປ້ອງກັນເຊື້ອ ເອດສ໌ |

**ຈ) ຖົງຢາງອະນາໄມສາມາດໃຊ້ໄດ້ໃນຄັ້ງດຽວ**

| |
|---|
| **ຄຳຕອບແມ່ນ: ຖືກ**--ຖົງຢາງອະນາໄມຖົງໜຶ່ງໃຊ້ໄດ້ພຽງຄັ້ງດຽວ. |

**ສ) ເຊື້ອເອດສ໌ ສາມາດຕິດຕໍ່ໄດ້ດ້ວຍການກິນອາຫານຮ່ວມກັນ**

| |
|---|
| **ຄຳຕອບແມ່ນ: ຜິດ**--ເຊື້ອ ເອດສ໌ ຄົ້ນພົບຢູ່ພາຍໃນເລືອດ. ມັນຍັງພົບເຫັນຢູ່ໃນທາດແຫຼວໃນຮ່າງກາຍຂອງມະນຸດ, ຢູ່ໃນຈຸດລັບຂອງຜູ້ຊາຍ ແລະ ຜູ້ຍິງ ແລະ ຢູ່ໃນນ້ຳນົມ. ມັນບໍ່ສາມາດແຜ່ເຊື້ອໄດ້ໃນທາງການກິນອາຫານຮ່ວມກັນ. |

**ຊ) ຄົນທີ່ມີເຊື້ອ ເອດສ໌ ສາມາດຢູ່ໄດ້ດົນນານ ແລະ ມີຊີວິດທີ່ຈະເລີນພັນ**

| |
|---|
| **ຄຳຕອບແມ່ນ: ຖືກ**--ຢາປົວທີ່ມີຊື່ວ່າ ແອນຕີ-ເຣດໂຕຣໄວໂຣ ຫຼື ເອອາຣວີ(anti-retroviral or ARV? ເຮັດໃຫ້ຄົນເຮົາທີ່ມີເຊື້ອເອດສມີຊີວິດຢູ່ໄດ້ດົນ ແລະ ມີຊີວິດທີ່ຈະເລີນພັນ. ຢາປົວຊະນິດນີ້ຮັກສາຊີວິດໃຫ້ຍືນຍາວ. ຊຸກຍູ້ໃຫ້ບຸກຄົນທີ່ມີເຊື້ອ ເອດສ໌ ກິນຢາດັ່ງກ່າວທຸກໆວັນຕາມຄຳສັ່ງຂອງທ່ານໝໍສຳລັບສຸຂະພາບ ແລະ ອະນາຄົດຂອງເຂົາເຈົ້າ. ວິທີດັ່ງກ່າວນີ້ເປັນການສະແດງຄວາມນັບຖື ແລະ ຄວາມເຫັນອົກເຫັນໃຈກັບເພື່ອນໆ? |

**7. ພາກສະຫຼຸບ**: ຍັງມີວິທີການທີ່ແຕກຕ່າງກັນໃນການປ້ອງກັນເຊື້ອ ເອດສ໌ໄອວີ HIV.

ໃນເລື່ອງຂອງການມີເພດສຳພັນ, ຖົງຢາງອະນາໄມສາມາດປ້ອງກັນການຖືພາ ແລະ ຍັງສາມາດປ້ອງກັນພະຍາດຕິດຕໍ່ທາງເພດສຳພັນ. ເພາະສະນັ້ນ ຖົງຢາງອະນາໄມເປັນສິ່ງທີ່ດີຫຼາຍ ເພາະວ່າທຸກວິທີການຈະຊ່ວຍປ້ອງກັນເຈົ້າເພື່ອບໍ່ໃຫ້ມີການການຖືພາ, ມີພຽງແຕ່ຖົງຢາງອະນາໄມເທົ່ານັ້ນທີ່ຈະປ້ອງກັນບໍ່ໃຫ້ມີການເຈືອປົນຂອງທາດແຫຼວໃນຮ່າງກາຍ. ພຽງແຕ່ໃຫ້ແນ່ໃຈວ່າຖົງຢາງອະນາໄມບໍ່ມີຮອຍຈີກຂາດ.

ມັນແມ່ນສິດທິ ແລະ ຄວາມຮັບຜິດຊອບຂອງແຕ່ລະຄົນທີ່ຈະໃຊ້ຖົງຢ່າງອະອາໄມທຸກຄັ້ງເມື່ອມີເພດສຳພັນ.

## ກິດຈະກຳ 4.1 ການສະໜັບສະໜູນບົດບາດຂອງເພດຊາຍ

**ຄຳແນະນຳສຳລັບຜູ້ນຳພາກິດຈະກຳເພື່ອນສອນເພື່ອນ:**

**ພາກການແນະນຳສຳລັບພາກກິດຈະກຳ:** ໃນກິດຈະກຳນີ້ ເຈົ້າຈະໄດ້ຊ່ວຍແນະນຳສະມາຊິກພາຍໃນກຸ່ມຂອງເຈົ້າຮຽນກ່ຽວກັບເພດຊາຍສາມາດໃຫ້ການສະໜັບສະໜູນ ແລະ ເປັນຫຍັງພວກເຂົາຈຶ່ງສະໜັບສະໜູນແມ່ຍິງ.

**ຈຸດປະສົງ:** ເພື່ອເປັນການແນະນຳກ່ຽວກັບປະໂຫຍດຂອງເພດຊາຍ, ຮຽນຮູ້ວິທີການທີ່ເພດຊາຍສາມາດສະໜັບສະໜູນເພດຍິງ.

**ເວລາ:** 20 ນາທີ

**ການນຳໃຊ້ອຸປະກອນ:** ວິດີໂອບົດບາດການສະໜັບສະໜູນຂອງເພດຊາຍ*https://youtu.be/5kgX9RqS7s*

## ເລີ່ມກິດຈະກຳ

1. **ພາກການແນະນຳສຳລັບກິດຈະກຳ. ອ່ານໂດຍໃຊ້ສຽງດັງ:** ສຸດທ້າຍນີ້, ພວກເຮົາຈະມາຮຽນຮູ້ເລື່ອງທີ່ສຳຄັນ: ວິທີການສະໜັບສະໜູນແມ່ຍິງ. ດັ່ງທີ່ພວກເຮົາໄດ້ສົນທະນາກັນ ເມື່ອເດັກຊາຍ ແລະ ເດັກຍິງເຖິງໄວສາວ-ບ່າວ ຮ່າງກາຍຂອງພວກເຂົາກໍຈະປ່ຽນແປງ. ເຈົ້າຈື່ໄດ້ບໍ່ວ່າເດັກຍິງເລີ່ມຈາກຈຸດໃດກ່ອນ? ຖ້າເບິ່ງວ່າຈະມີຄົນຕອບບໍ່.
2. **ອະທິບາຍ:** ເຂົາເຈົ້າຈະຜະລິດໄຂ່ອອກມາເດືອນລະໜ່ວຍ ແລະ ພວກເຈົ້າຈື່ອີກບໍ່ວ່າຈະເກີດຫຍັງຂຶ້ນກັບຜູ້ຍິງຖ້າວ່າໄຂ່ສຸກແລ້ວມັນຕົກ ແຕ່ບໍ່ໄດ້ຮັບການປະຕິສົນທິ(ຮັບການປະສົມພັນ)? ເບິ່ງວ່າຈະມີຄົນຕອບແນວໃດ.
3. **ອະທິບາຍ:** ລາວຈະມີປະຈຳເດືອນ; ໄຂ່ທີ່ມັນສຸກມັນໄດ້ອອກຈາກຮ່າງກາຍແລ້ວຈະກາຍເປັນເລືອດ. ນີ້ເປັນເລື່ອງທຳມະຊາດຂອງເພດຍິງທຸກຄົນຕ້ອງມີປະຈຳເດືອນ. ແຕ່ເນື່ອງຈາກມີເລືອດອອກມາ ຜູ້ຍິງອາດຮູ້ສຶກເມື່ອຍ ແລະ ອາດຈະມີອາການເຈັບທ້ອງນ້ອຍ, ມີອາການຫງຸດຫງິດອາລົມເສຍ. ປົກກະຕິການເປັນປະຈຳເດືອນແມ່ນປະມານ 7 ວັນ.
4. ຈາກນັ້ນ, ຖ້າເພດຍິງຖືພາ, ພາລະທຸກຢ່າງກໍຢູ່ນຳຜູ້ຍິງເພາະຜູ້ຍິງເປັນຄົນອູ້ມທ້ອງ, ດັ່ງນັ້ນ ເພດຍິງຈຶ່ງຕ້ອງຮັບຜົນສະທ້ອນທີ່ຕາມມາບໍ່ວ່າຈະເປັນກໍລະນີໃດກໍ່ແລ້ວແຕ່. ແຕ່ດັ່ງທີ່ພວກເຮົາໄດ້ເວົ້າມາກ່ອນວ່າ ລູກມັນເກີດມາຈາກຄົນສອງຄົນ, ສະນັ້ນ ມັນຄວນຈະເປັນຄວາມຮັບພິດຊອບຂອງຄົນສອງຄົນ.
5. **ເວົ້າ:** ນີ້ແມ່ນເຫດຜົນທີ່ວ່າມັນເປັນສິ່ງສຳຄັນທີ່ພວກເຮົາຄວນຈະຊ່ວຍ ແລະ ໃຫ້ການສະໜັບສະໜູນຜູ້ຍິງ. ຕອນນີ້ພວກເຮົາຈະເປີດວິດີໂອກ່ຽວກັບວິທີດັ່ງກ່າວ.
6. **ເປີດວິດີໂອ** ກ່ຽວກັບບົດບາດຂອງຜູ້ຊາຍ https://youtu.be/5kgX9RqS7s
7. **ສະຫຼຸບກິດຈະກຳ ຕາມຄຳຖາມລຸ່ມນີ້:**

| **ຄຳຖາມທວນຄືນເນື້ອໃນສຳຄັນຂອງກິດຈະກຳໂດຍຫຍໍ້** |
|---|
| - ຂໍ້ຄວາມທີ່ສຳຄັນຂອງວິດີໂອນີ້ແມ່ນຫຍັງ? |
| - ພວກເຮົາຈະສະໜັບສະໜູນຜູ້ຍິງໄດ້ແນວໃດ? |
| - ເຈົ້າຈະໃຫ້ການສະໜັບສະໜູນຜູ້ຍິງບໍ່? |
| - ເຈົ້າຈະໃຫ້ການສະໜັບສະໜູນຜູ້ຍິງທີ່ຢູ່ອ້ອມຂ້າງເຈົ້າແນວໃດ? |

## ສະຫຼຸບເພດສຶກສາ ແລະ ສຸຂະພາບຈະເລີນພັນສໍາລັບເດັກຊາຍ

**ຜູ້ນໍາພາກິດຈະກໍາເວົ້າ:** ຂໍຂອບໃຈທຸກຄົນທີ່ເຂົ້າຮ່ວມກິດຈະກໍາຕ່າງໆຕັ້ງແຕ່ຕົ້ນຈົນຈົບ ພວກເຮົາຮູ້ສຶກດີໃຈຫຼາຍທີ່ທຸກຄົນໄດ້ຮຽນຮູ້ຫຼາຍຢ່າງໃນຕອນດຽວ. ກ່ອນທີ່ພວກເຮົາຈະເລີກເຮົາມາເບິ່ງວິທີການເບິ່ງປຶ້ມນ້ອຍນີ້ກ່ອນ. ແນະນໍາໃຫ້ນັກຮຽນແຕ່ລະຄົນເປີດປຶ້ມພ້ອມ**ອະທິບາຍວ່າ**:

ໃນສ່ວນບົດຮຽນຂອງໂຄງການການຮ່ວມປັບປຸງດ້ານໂພຊະນາການສໍາລັບໂຮງຮຽນມັດທະຍົມຕົ້ນກ່ຽວກັບສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ ພວກເຮົາສາມາດອະທິບາຍບາງຫົວຂໍ້ທີ່ສໍາຄັນ. ນອກນັ້ນ, ຕາມຫຼັກສູດການຮຽນ-ການສອນໃນໂຮງຮຽນພວກເຮົາຍັງຈະໄດ້ຮຽນຈະແຈ້ງຂຶ້ນຕື່ມອີກ.

ອີກຢ່າງ ມັນຍັງມີຄໍາຖາມຈໍານວນໜຶ່ງຕື່ມອີກ. ປຶ້ມນ້ອຍຫົວນີ້ຕອບສະໜອງສິ່ງງ່າຍໆ ແລະ ເປັນທໍາມະດາ ແຕ່ມີຂໍ້ມູນຂ່າວສານເພດສຶກສາ ແລະ ສຸຂະພາບຈະເລີນພັນທີ່ຖືກຕ້ອງ.

ຖ້າຫາກເຈົ້າມີຂໍ້ສົງໄສບາງຢ່າງ, ເຈົ້າສາມາດເປີດເບິ່ງຂໍ້ມູນປຶ້ມນີ້, ເບິ່ງວິດີໂອ, ຖາມເພື່ອນ ຫຼື ຖາມອາຈານເຈົ້າກໍໄດ້.

ໃນໜ້າສຸດທ້າຍ ເຈົ້າຈະເຫັນຖານຄົ້ນຫາຂໍ້ມູນ(ລິ້ງ links). ສະແດງໃຫ້ພວກເຂົາເບິ່ງປຶ້ມໜ້າສຸດທ້າຍ. ໃນຖານຄົ້ນຫາຂໍ້ມູນເຫຼົ່ານີ້ມີວິດີໂອທຸກເລື່ອງທີ່ພວກເຮົາໄດ້ເປີດໃຫ້ພວກເຈົ້າເບິ່ງຢູ່ໃນຫ້ອງຮຽນ. ຕົວຢ່າງ: ວິດີໂອບາງເລື່ອງເວົ້າກ່ຽວກັບວິທີຄຸມກໍາເນີດທີ່ແຕກຕ່າງກັນຫຼາຍຢ່າງ.

**ໂຄງການ ຮ່ວມມືປັບປຸງດ້ານໂພຊະນາການ ແຂວງ ຫຼວງນໍ້າທາ**

ຈຸດປະສົງລວມຂອງໂຄງການ ແນໃສ່ເພື່ອຄໍ້າປະກັນດ້ານສະບຽງອາຫານ ແລະ ໂພຊະນາການ ໃນຄົວເຮືອນ ຢູ່ໃນເຂດຊົນນະບົດ ແລະ ສ້າງຄວາມອຸດົມສົມບູນດ້ານກະສິກຳແບບຍືນຍົງ ຢູ່ໃນຂັ້ນຄົວເຮືອນ ແລະ ຂັ້ນບ້ານຢູ່ໃນ ແຂວງ ຫຼວງນໍ້າທາ, ພ້ອມທັງປັບປຸງດ້ານໂພຊະນາການ ຂອງຜູ່ຍິງໄວໜຸ່ມ, ຜູ່ຍິງຖືພາ, ຜູ່ຍິງທີ່ຂາດສານອາຫານ ແລະ ເດັກນ້ອຍ ອາຍຸ ຕໍ່າກວ່າ 5 ປີ ລົງມາ ທີ່ຢູ່ໃນເຂດພື້ນທີ່ເປົ້າໝາຍຂອງໂຄງການ.

**ສະໜັບສະໜູນທຶນໂດຍ: ສະຫະພາບ ເອີຣົບ**

**ອົງການແຄຣ໌ ນານາຊາດ ປະຈໍາ ສປປ ລາວ**

ຖະໜົນໜອງສ້າງທໍ່, ບ້ານໜອງສ້າງທໍ່, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ, ຕູ້ໄປສະນີ 4328
ໂທ: (856-21) 217 727, 212 991 E-mail: lao.info@careint.org